**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ

ກອງເລຂາ

ເລກທີ...045.../ຄຕມຊ

ນະຄອນຫຼວງວຽງຈັນ, ວັນທີ...17...ກຸມພາ 2023

# ບົດສະຫຼຸບ

# ການຈັດຕັ້ງປະຕິບັດວຽກງານຕ້ານການຄ້າມະນຸດ ປະຈຳປີ 2022 ຂອງ ສປປ ລາວ

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 245/ນຍ, ລົງວັນທີ 03 ກໍລະກົດ 2018 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມະການຕ້ານການຄ້າມະນຸດ;
- ອີງຕາມ ແຜນງານແຫ່ງຊາດວ່າດ້ວຍການສະກັດກັ້ນ ແລະ ຕ້ານການຄ້າມະນຸດ ໄລຍະ III ແຕ່ປີ 2021-2025 ສະບັບເລກທີ 027/ຄຕມຊ, ລົງວັນທີ 31 ສິງຫາ 2021;
- ອີງຕາມ ແຜນການເຄື່ອນໄຫວວຽກງານຕົວຈິງ ຂອງກອງເລຂາຄະນະກຳມະການຕ້ານການຄ້າມະນຸດ.

ຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ ຂອງ ສປປ ລາວ ໄດ້ທົບທວນ ແລະ ຕີລາຄາຄືນຜົນຂອງການຈັດຕັ້ງປະຕິບັດວຽກງານຕ້ານການຄ້າມະນຸດ ຕາມແຜນງານແຫ່ງຊາດ ແລະ ແຜນການເຄື່ອນໄຫວປະຈຳປີ ຂອງຕົນ ຢ່າງກ້ວາງຂວາງ ແລະ ເລິກເຊິ່ງ ສາມາດສະຫຼຸບ ແລະ ຕີລາຄາໄດ້ດັ່ງນີ້:

## I. ຕີລາຄາສະພາບການຄ້າມະນຸດ

### 1. ສະພາບການຄ້າມະນຸດຂອງໂລກ ແລະ ພາກພື້ນ.

ບັນຫາການຄ້າມະນຸດ ແມ່ນບັນຫາອາຊະຍາກຳຂ້າມຊາດ ທີ່ມີການຈັດຕັ້ງທີ່ຮ້າຍແຮງ ເຊິ່ງໄດ້ເກີດຂຶ້ນ, ກຳລັງເກີດຂຶ້ນ, ຍັງຈະສືບຕໍ່ເກີດຂຶ້ນ ດ້ວຍຫຼາຍຮູບແບບ, ຫຼາຍວິທີການ, ມີລັກສະນະເຄືອຂ່າຍຂ້າມຊາດ, ມີລັກສະນະສັບສົນ, ທຸກຄົນສາມາດຕົກເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໄດ້ ຖ້າບໍ່ມີສະຕິລະວັງຕົວ. ຈຸດປະສົງຕົ້ນຕໍ ຂອງການຄ້າມະນຸດ ແມ່ນການຂູດຮີດແຮງງານ ແລະ ຂູດຮີດທາງເພດ ເພື່ອຫາຜົນປະໂຫຍດທີ່ຜິດກົດໝາຍ ແລະ ຖືກຈັດຢູ່ໃນອັນດັບ 03 ທີ່ມີຜົນກຳໄລມະຫາສານ ຖັດຈາກການຄ້າຂາຍຢາເສບຕິດ ແລະ ອາວຸດເສິກ. ດັ່ງທີ່ພວກເຮົາຮູ້ນຳກັນແລ້ວວ່າ, ແຕ່ລະປີ ໃນທົ່ວໂລກມີຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ເປັນຈຳນວນຫຼາຍລ້ານຄົນ (ປະມານ 45,8 ລ້ານຄົນ; ໃນນີ້, ມີປະມານ 10 ລ້ານຄົນເປັນເດັກ; 15,4 ລ້ານຄົນຖືກບັງຄັບໃຫ້ແຕ່ງງານ; 4,8 ລ້ານຄົນ ຖືກຂູດຮີດທາງເພດ ຊຶ່ງເປັນຕົວເລກຄາດກະ, ເພາະຕົວເລກທີ່ແນ່ນອນທົ່ວໂລກກໍບໍ່ສາມາດສະຫຼຸບໄດ້ເທື່ອ).

### 2. ສະພາບການຄ້າມະນຸດຢູ່ ສປປ ລາວ

ສຳລັບ ສປປ ລາວ ກໍເປັນປະເທດໜຶ່ງໃນບັນດາປະເທດ ທີ່ໄດ້ຮັບຜົນກະທົບຈາກການຄ້າມະນຸດ ເນື່ອງຈາກທີ່ຕັ້ງພູມສັນຖານຂອງປະເທດ ມີຄວາມສະດວກໃນການເດີນທາງເຂົ້າ-ອອກຂອງພົນລະເມືອງລາວ ແລະ ຕ່າງປະເທດ ແລະ ທັງເປັນປະເທດ ທີ່ກຳລັງໄດ້ຮັບການພັດທະນາທາງດ້ານເສດຖະກິດຢ່າງກ້ວາງຂວາງ ເຊິ່ງມີຄວາມຮຽກຮ້ອງຕ້ອງການກຳລັງແຮງງານນັບມື້ນັບສູງຂຶ້ນ.

ໃນປີ 2022 ເຈົ້າໜ້າທີ່ພວກເຮົາ ໄດ້ພົບເຫັນການຄ້າມະນຸດເກີດຂຶ້ນຢູ່ປະເທດເຮົາປະກອບມີ ການຫຼອກລວງຜູ້ຖືກເຄາະຮ້າຍໄປຂາຍແຮງງານ ຫຼື ບັງຄັບແຮງງານ, ບັງຄັບບໍລິການທາງເພດ, ການຮັບຈ້າງຖືພາ ແລະ ການຖ່າຍທອດສົດການເປືອຍກາຍຂອງຍິງ-ຊາຍ ແລະ ການຮ່ວມເພດກັນອອກສື່ສັງຄົມອອນລາຍ.

ສະພາບທີ່ພົ້ນເດັ່ນ ໃນປີ 2022 ແມ່ນຂູດຮີດແຮງງານ ແລະ ບັງຄັບທາງເພດທີ່ເກີດຂຶ້ນ ຢູ່ເຂດເສດຖະກິດພິເສດ ເຊິ່ງເຮັດໃຫ້ບັນດາໄວໜຸ່ມທັງຍິງ ແລະ ຊາຍຄົນລາວ ແລະ ຕ່າງປະເທດ ຕົກເປັນຜູ້ຖືກເຄາະຮ້າຍ ແລະ ກຸ່ມສ່ຽງເປັນເປັນຈຳນວນຫຼາຍ ເຊິ່ງໄດ້ສົ່ງຜົນກະທົບອັນບໍ່ດີທັງທາງກົງ ແລະ ທາງອ້ອມຕໍ່ປະເທດຂອງພວກເຮົາ.

ຕໍ່ບັນຫາດັ່ງກ່າວ ເລີ່ມແຕ່ວັນທີ **01** ກັນຍາ 2022 ກະຊວງ ປກສ ໄດ້ສົ່ງກຳລັງເຂົ້າໄປປະຈຳການແກ້ໄຂບັນຫາການຄ້າມະນຸດຢູ່ເຂດດັ່ງກ່າວ ມາເຖິງວັນທີ 12 ທັນວາ 2022 ສາມາດໄດ້ຊ່ວຍເຫຼືອກຸ່ມສ່ຽງ ແລະ ຜູ້ຖືກເຄາະຮ້າຍ ທັງໝົດ 1,802 ຄົນ, ຍິງ 662 ຄົນ ລວມມີ **20** ສັນຊາດ. ສາມາດດຳເນີນຄະດີ ໄດ້ 12 ເລື່ອງ, ຜູ້ຖືກຫາ 27 ຄົນ, ຍິງ 03 ຄົນ, ຕ່າງປະເທດ 17 ຄົນ, ມີຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ 21 ຄົນ, ຕ່າງປະເທດ 14 ຄົນ.

## II. ການຈັດຕັ້ງປະຕິບັດວຽກງານຕ້ານການຄ້າມະນຸດ ໃນໄລຍະ 01 ປີຜ່ານມາ.

### 1. ຜົນງານທີ່ພົ້ນເດັ່ນ:

### 1.1. ດ້ານວຽກງານນະໂຍບາຍ.

ລັດຖະບານ ສປປ ລາວ ກໍຄືຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ ໄດ້ຄົ້ນຄວ້າທິດທາງແຜນການ ແລະ ກຳນົດນະໂຍບາຍ ເພື່ອຕອບຕ້ານການຄ້າມະນຸດ ອອກດ້ວຍຫຼາຍວິທີການ ຄື:

1.1.1 **ຂະແໜງປ້ອງກັນຄວາມສະຫງົບ** ສຳເລັດການຈັດກອງປະຊຸມສະຫຼຸບການຈັດຕັ້ງປະຕິບັດວຽກງານຕ້ານການຄ້າມະນຸດ ປະຈຳປີ **2021** ແລະ ທິດທາງແຜນການ ປະຈຳປີ **2022** ຂອງຄະນະກຳມະການຕ້ານການຄ້າມະນຸດ, ຈັດກອງປະຊຸມສະຫຼຸບຖອດຖອນບົດຮຽນຈັດລາຍການວິທະຍຸ, ໂທລະພາບ ລາຍການປະຊາຮ່ວມໃຈຕ້ານໄພຄ້າມະນຸດ ຂອງກະຊວງ ປກສ ແລະ ກະຊວງ ປກຊ, ຈັດກອງປະຊຸມສະຫຼຸບການຈັດຕັ້ງປະຕິບັດວຽກງານຕ້ານການຄ້າມະນຸດ ປະຈຳຫົກເດືອນຕົ້ນປີ **2022** ແລະ ທິດທາງແຜນການຫົກເດືອນທ້າຍປີ **2022** ມີຜູ້ເຂົ້າຮ່ວມທັງໝົດ **128** ຄົນ, ຍິງ **25** ຄົນ; ໄດ້ສຳເລັດເຮັດບົດສະຫຼຸບການຈັດຕັ້ງປະຕິບັດວຽກງານຕ້ານການຄ້າມະນຸດ ປະຈຳປີ **2021** ຂອງ ສປປ ລາວ ແລະ ໄດ້ສົ່ງໃຫ້ສະຖານເອກອັກຄະລັດຖະທູດສະຫະລັດອາເມລິກາ ປະຈຳ ສປປ ລາວ ເພື່ອນຳໃຊ້ເປັນຂໍ້ມູນໃນການຈັດອັນດັບວຽກງານຕ້ານການຄ້າມະນຸດ ຢູ່ທົ່ວໂລກ ເຊິ່ງໃນປີ **2021** ສປປ ລາວ ແມ່ນໄດ້ຖືກຈັດຢູ່ອັນດັບ 02 (Tier 2); ຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ ພ້ອມດ້ວຍຄະນະ ໄດ້ລົງເຄື່ອນໄຫວຕິດຕາມ ແລະ ຊຸກຍູ້ການຈັດຕັ້ງປະຕິບັດວຽກງານຕ້ານການຄ້າມະນຸດ ຢູ່ແຂວງບໍ່ແກ້ວ ແລະ ແຂວງຫຼວງນ້ຳທາ. ເຊິ່ງໄດ້ສົ່ງກຳລັງໄປປະຈຳການ ຢູ່ເມືອງຕົ້ນເຜິ້ງ, ແຂວງບໍ່ແກ້ວ ຈຳນວນ **12** ຄົນ, ປະຈຸບັນຢູ່ໃນຂັ້ນຕອນການສ້າງກອງບັນຊາການ ປກສ ເຂດເສດຖະກິດພິເສດສາມລ່ຽມຄຳ ທີ່ຢູ່ພາຍໃຕ້ການບັນຊາໂດຍກົງຈາກສູນກາງ.

1.1.2 **ຂະແໜງແຮງງານ ແລະ ສະຫວັດດີການສັງຄົມ** ໄດ້ອອກຂໍ້ຕົກລົງວ່າດ້ວຍການຄຸ້ມຄອງວິສາຫະກິດບໍລິການຈັດຫາງານ ສະບັບປັບປຸງ ເລກທີ 1050/ຮສສ, ລົງວັນທີ **25** ມີນາ **2022**; ໄດ້ອອກແຈ້ງການ ເຖິງພະແນກ ຮສສ ແຂວງ ແລະ ນະຄອນຫຼວງວຽງຈັນ, ບັນດາວິສາຫະກິດບໍລິການຈັດຫາງານ ແລະ ພາກສ່ວນກ່ຽວຂ້ອງ ກ່ຽວກັບການເລີ່ມຈັດສົ່ງແຮງງານລາວໄປເຮັດວຽກຢູ່ປະເທດໄທໃນຮອບໃໝ່ ຊຶ່ງໄດ້ເລີ່ມຈັດຕັ້ງປະຕິບັດນັບແຕ່ວັນທີ **01** ມີນາ 2022 ເປັນຕົ້ນໄປ; ໄດ້ຈັດກອງປະຊຸມປຶກສາຫາລື ແລະ ຄົ້ນຄວ້າຮ່າງກົດໝາຍ ວ່າດ້ວຍການຈັດຫາງານ ຈຳນວນ **07** ຄັ້ງ ຢູ່ນະຄອນຫຼວງວຽງຈັນ ແລະ ແຂວງວຽງຈັນ ມີຜູ້ເຂົ້າຮ່ວມ **177** ຄົນ, ຍິງ **66** ຄົນ; ໄດ້ສຳເລັດການຮ່າງເນື້ອໃນກົດລະບຽບສະມາຄົມບໍລິສັດຈັດຫາງານ ເພື່ອນຳສະເໜີກະຊວງພາຍໃນພິຈາລະນາຮັບຮອງ;

1.1.3 **ສູນກາງສະຫະພັນແມ່ຍິງລາວ** ໄດ້ປັບປຸງຄູ່ມືການໃຫ້ຄຳປຶກສາທາງໂທລະສັບສາຍດ່ວນ ແລະ ຈັດກອງປະຊຸມກ່ຽວກັບການປະຕິບັດຂອງສູນພັກເຊົາ: ການແບ່ງປັນຄວາມຮູ້ ແລະ ປະສົບການ ລະຫວ່າງ ຜູ້ປະຕິບັດງານຕົວຈິງ ໃນວັນທີ 28 ກຸມພາ 2022 ທີ່ໂຮງແຮມລາວພຣາຊາ; ໄດ້ຕ້ອນຮັບແຂກຈາກພາກສ່ວນທີ່ກ່ຽວຂ້ອງມາຢ້ຽມຢາມ ແລະ ທັດສະນະສຶກສາຢູ່ສູນໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ-ເດັກນ້ອຍ ຈຳນວນ **08** ຄັ້ງ: ມີຜູ້ເຂົ້າຮ່ວມທັງໝົດ 168 ຄົນ, ຍິງ 66 ຄົນ;

1.1.4 **ຂະແໜງການຍຸຕິທຳ** ໄດ້ຈັດກອງປະຊຸມຕ່າງໆ ເພື່ອຕອບຕ້ານການຄ້າມະນຸດ ຄື: ກອງປະຊຸມຮັບຮອງປຶ້ມຄູ່ມືກ່ຽວກັບການໂຄສະນາເຜີຍແຜ່ກົດໝາຍ, ກອງປະຊຸມຄະນະຮັບຜິດຊອບວຽກງານຕ້ານການຄ້າມະນຸດກ່ຽວກັບຜົນສຳເລັດຂອງກອງປະຊຸມວຽກງານຕ້ານການຄ້າມະນຸດປະຈຳປີ 2021 ຄາດກະແຜນການ ແລະ ກິດຈະກຳປີ 2022, ກອງປະຊຸມພາຍໃນ ເພື່ອຜ່ານເນື້ອໃນຄຳແນະນຳ ຂອງລັດຖະມົນຕີ ກະຊວງຍຸຕິທຳ

ກ່ຽວກັບການຈັດຕັ້ງເຜີຍແຜ່ດຳລັດວ່າດ້ວຍການໂຄສະນາເຜີຍແຜ່ນິຕິກຳ, ກອງປະຊຸມລະດົມແນວຄວາມຄິດປັບປຸງເຄື່ອງມືຮັບໃຊ້ ເຂົ້າໃນວຽກງານຈັດໝາຍເຫດທາງລັດຖະການ, ກອງປະຊຸມປະກອບຄຳເຫັນໃສ່ຮ່າງກົດໝາຍ ວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ, ກອງປະຊຸມທາບທາມປະກອບຄຳເຫັນໃສ່ຮ່າງແຜນດຳເນີນວຽກງານຊ່ວຍເຫຼືອທາງດ້ານກົດໝາຍ ໄລຍະປີ 2023-2026, ກອງປະຊຸມຄະນະຄຸ້ມຄອງໂຄງການສົ່ງເສີມການເຂົ້າເຖິງກົດໝາຍ ແລະ ຄວາມຍຸຕິທຳຂອງປະຊາຊົນ, ກອງປະຊຸມຜ່ານການທາບທາມຄຳເຫັນ ແລະ ທົບທວນການຈັດຕັ້ງປະຕິບັດແຜນພັດທະນາວຽກງານໂຄສະນາເຜີຍແຜ່ກົດໝາຍປີ 2022 ມີຜູ້ເຂົ້າຮ່ວມທັງໝົດ 331 ຄົນ, ຍິງ 119 ຄົນ; ໄດ້ເຂົ້າຮ່ວມກອງປະຊຸມຮ່ວມກັບກະຊວງພາຍໃນກ່ຽວກັບການສ້າງຄວາມເຂັ້ມແຂງຖານຂໍ້ມູນແບບເອເລັກໂຕນິກ ການຄຸ້ມຄອງຜົນລະເມືອງໃຫ້ເປັນລະບົບ ມີຜູ້ເຂົ້າຮ່ວມ 39 ຄົນ, ຍິງ 11 ຄົນ; ໄດ້ປັບປຸງປຶ້ມຄູ່ມືການໄກ່ເກ່ຍການກະທຳຜິດຂອງເດັກ ເພື່ອປະກອບໃສ່ປຶ້ມຄູ່ມືວຽກງານການແກ້ໄຂຂໍ້ຂັດແຍ່ງຂັ້ນບ້ານ; ໄດ້ສຳເລັດການປັບປຸງຄູ່ມືວຽກງານຈັດໝາຍເຫດທາງລັດຖະການ; ໄດ້ສຳເລັດການຮ່າງຂໍ້ຕົກລົງກ່ຽວກັບການແຕ່ງຕັ້ງຄະນະຮັບຜິດຊອບ ເນື້ອໃນ ແລະ ກອງເລຂາ ກ່ຽວກັບການ ປັບປຸງກົດໝາຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ; ໄດ້ສ້າງແບບຟອມເກັບກຳຂໍ້ມູນສະຖິຕິໂຄສະນາເຜີຍແຜ່ກົດໝາຍຜ່ານທາງກູໂກ່ຟອມ (google forms); ໄດ້ສຳເລັດການລົງເກັບກຳຂໍ້ມູນການປັບປຸງກົດໝາຍ ວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກຈຳນວນ 03 ຄັ້ງ: ຢູ່ພາກໃຕ້ ແຂວງຈຳປາສັກ ແລະ ສະຫວັນນະເຂດ, ຢູ່ພາກເໜືອແຂວງໄຊຍະບູລີ ແລະ ຫຼວງພະບາງ, ຢູ່ພາກກາງ ນະຄອນຫຼວງວຽງຈັນ, ບໍລິຄຳໄຊ ແລະ ແຂວງວຽງຈັນ; ໄດ້ລົງເຄື່ອນໄຫວແລກປ່ຽນບົດຮຽນກ່ຽວກັບວຽກງານຊ່ວຍເຫຼືອທາງດ້ານກົດໝາຍ ຢູ່ທີ່ແຂວງຫຼວງນ້ຳທາ ມີແຂວງຜົ້ງສາລີ, ສະຫວັນນະເຂດ ແລະ ນະຄອນຫຼວງວຽງຈັນ ເຂົ້າຮ່ວມ 17 ຄົນ, ຍິງ 04 ຄົນ; ໄດ້ນຳເອົາກົດໝາຍ 02 ສະບັບເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນ ເທື່ອທີ 04 ຂອງສະພາແຫ່ງຊາດ ຊຸດທີ 09 ປະກອບມີກົດໝາຍວ່າດ້ວຍທະນາຍຄວາມ ແລະ ກົດໝາຍວ່າດ້ວຍທະບຽນສານ; ໄດ້ຈັດງານການຮັບຟັງປາຖະກະຖາວັນສາກົນ ເພື່ອລົບລ້າງທຸກຮູບການຈຳແນກແມ່ຍິງ ມີຜູ້ເຂົ້າຮ່ວມ 130 ຄົນ, ຍິງ 78 ຄົນ.

1.1.5 **ຂະແໜງການສາທາລະນະສຸກ** ສຳເລັດການປັບປຸງຂໍ້ຕົກລົງ ວ່າດ້ວຍການແຕ່ງຕັ້ງ ຄະນະກຳມະການຕ້ານການຄ້າມະນຸດ ກະຊວງສາທາລະນະສຸກ; ໄດ້ຈັດກອງປະຊຸມປຶກສາຫາລື ປັບປຸງລະບົບການປະສານງານວຽກງານຕ້ານການຄ້າມະນຸດ ຂອງຂະແໜງສາທາລະນະສຸກ ຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຊ່ວຍເຫຼືອ ແລະ ສົ່ງຕໍ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ 03 ຄັ້ງ: ແຂວງວຽງຈັນ, ແຂວງບໍລິຄຳໄຊ ແລະ ແຂວງເຊກອງ ມີຜູ້ເຂົ້າຮ່ວມທັງໝົດ 117 ຄົນ ຍິງ 57 ຄົນ; ສຳເລັດການປັບປຸງຂໍ້ຕົກລົງ ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບການປະສານງານສະກັດກັ້ນຕ້ານການຄ້າມະນຸດ ກະຊວງສາທາລະນະສຸກ ໃຫ້ 07 ໂຮງໝໍສູນກາງ;

1.1.6 **ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ** ໄດ້ສຳເລັດການເຊັນບົດບັນທຶກກັບບໍລິສັດໝາກກາວລາວຂາອອກ-ຂາເຂົ້າ ຈຳກັດຜູ້ດຽວ ເພື່ອສ້າງວຽກເຮັດງານທຳໃຫ້ກັບຊາວໜຸ່ມ ເພື່ອຫຼຸດຜ່ອນຊາວໜຸ່ມບໍ່ໃຫ້ຕົກເປັນເຫຍື່ອຂອງການຄ້າມະນຸດ 03 ແຂວງຄື: ແຂວງຫຼວງພະບາງ, ແຂວງອຸດົມໄຊ ແລະ ແຂວງຫົວພັນ ໂດຍມີຜູ້ເຂົ້າຮ່ວມ 50 ກວ່າຄົນ; ໄດ້ສຳເລັດການຈັດກອງປະຊຸມຖອດຖອນບົດຮຽນວຽກງານຕ້ານການຄ້າມະນຸດ ທົ່ວປະເທດ ແຂວງວຽງຈັນ ມີຜູ້ເຂົ້າຮ່ວມ 95 ຄົນ, ຍິງ 65 ຄົນ; ຈັດຂະບວນການອອກແຮງງານລວມອ້ອມຂ້າງ ເພື່ອລະນຶກວັນສາກົນຕ້ານການຄ້າມະນຸດ ໂດຍມີຜູ້ເຂົ້າຮ່ວມທັງໝົດ 204 ຄົນ, ຍິງ 89 ຄົນ.

1.1.7 **ສູນກາງສະຫະພັນກຳມະບານລາວ** ໄດ້ລົງເຄື່ອນໄຫວຊຸກຍູ້ ແລະ ຕິດຕາມການຈັດຕັ້ງປະຕິບັດວຽກງານປົກປ້ອງແຮງງານຂອງສະຫະພັນກຳມະບານແຂວງ ສາລະວັນ, ເຊກອງ, ຈຳປາສັກ, ອັດຕະປື, ບໍລິຄຳໄຊ, ຄຳມ່ວນ ແລະ ສະຫັວນນະເຂດ ໂດຍສະເພາະແມ່ນການຜັນຂະຫຍາຍແຜນພັດທະນາວຽກງານກຳມະບານ 05 ປີ ຄັ້ງທີ IV (2021-2025); ແຜນງານທີ 04 ວຽກງານປົກປ້ອງສິດ ແລະ ຜົນປະໂຫຍດຂອງສະມາຊິກກຳມະບານ, ກຳມະກອນ ແລະ ຜູ້ອອກແຮງງານ; ໄດ້ຈັດກອງປະຊຸມຮ່ວມກັບ ຄະນະສະຫະພັນກຳມະບານ

ກະຊວງປ້ອງກັນປະເທດ ເພື່ອປຶກສາຫາລືກ່ຽວກັບແຜນການຈ່າຍເງິນອຸດໜູນອອກການໃຫ້ແກ່ພະນັກງານ ບໍລິສັດ ຊີມັງລາວ ມະຫາຊົນ, ກອງປະຊຸມປຶກສາຫາລືກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງແຮງງານຮ່ວມກັບບັນດາກະຊວງ ແລະ ອົງການໃນຂົງເຂດຍຸຕິທຳເພື່ອປຶກສາຫາລືກ່ຽວກັບການແກ້ໄຂຂໍ້ຂັດແຍ່ງແຮງງານບາງກໍລະນີ, ກອງປະຊຸມການຈັດຕັ້ງປະຕິບັດແຜນງານປົກປ້ອງແຮງງານ ໄລຍະ 05 ປີ (2021-2025) ທົ່ວປະເທດແບບອອນລາຍ, ກອງປະຊຸມປຶກສາຫາລືກ່ຽວກັບລະບົບເງິນເດືອນ ແລະ ນະໂຍບາຍດ້ານສະຫັວດດີການ ໃຫ້ແກ່ພະນັກງານລັດຖະກອນ ຢູ່ ສປປ ລາວ ມີຜູ້ເຂົ້າຮ່ວມທັງໝົດ 179 ຄົນ, ຍິງ 101 ຄົນ; ໄດ້ສຳເລັດການປັບປຸງເພີ່ມຄ່າແຮງງານຂັ້ນຕ່ຳຊຸດໃໝ່ ໃຫ້ແກ່ຜູ້ອອກແຮງງານພາກວິສາຫະກິດ ແລະ ແຮງງານນອກລະບົບ ຈາກ 1.100.000 ກີບ ມາເປັນ 1.200.000 ກີບ ໃນເດືອນ ສິງຫາ 2022 ແລະ ເພີ່ມຂຶ້ນຕື່ມເປັນ 1.300.000 ກີບ ໃນເດືອນພຶດສະພາ 2022; ໄດ້ເຊັນບົດບັນທຶກການຮ່ວມມືລະຫວ່າງກົມປົກປ້ອງແຮງງານສູນກາງສະຫະພັນກຳມະບານລາວ ກັບ ຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ ກະຊວງແຜນການ ແລະ ການຮ່ວມມື ເພື່ອອຳນວຍຄວາມສະດວກໃນການໄປເຄື່ອນໄຫວວຽກງານວິຊາສະເພາະ ຂອງອົງການກຳມະບານລາວ ຢູ່ບັນດາຫົວໜ່ວຍແຮງງານທີ່ຂຶ້ນກັບຫ້ອງການຄຸ້ມຄອງເຂດເສດຖະກິດພິເສດ-ສະເພາະ ແລະ ບໍລິສັດລົດໄຟລາວ-ຈີນທົ່ວປະເທດ ມີຜູ້ເຂົ້າຮ່ວມ 80 ຄົນ, ຍິງ 35 ຄົນ.

1.1.8 **ຂະແໜງປ້ອງກັນປະເທດ** ໄດ້ສຳເລັດການເຮັດຂໍ້ຕົກລົງແຕ່ງຕັ້ງຄະນະອະນຸກຳມະການຕ້ານການຄ້າມະນຸດຂັ້ນແຂວງ ແລະ ນະຄອນຫຼວງວຽງຈັນ ສະບັບເລກທີ 969/ກຫດ, ລົງວັນທີ 07 ມັງກອນ 2022 ໄດ້ແຈ້ງເຖິງບັນດາກອງບັນຊາການທະຫານແຂວງ ແລະ ນະຄອນຫຼວງວຽງຈັນໄດ້ສຳເລັດ;

1.1.9 **ນອກຈາກນີ້, ບັນດາຄະນະກຳມະການຕ້ານການຄ້າມະນຸດ ແຂວງ ແລະ ນະຄອນຫຼວງວຽງຈັນໄດ້ຈັດຕັ້ງປະຕິບັດບັນດາກິດຈະກຳຕ່າງໆຄື:**

1.1.10 .1 ໄດ້ຈັດກອງປະຊຸມສະຫຼຸບວຽກງານຕ້ານການຄ້າມະນຸດ ປະຈຳປີ 2021 ແລະ ທິດທາງແຜນການປະຈຳປີ 2022, ກອງປະຊຸມປະຈຳປີ 2018-2021 ແລະ ທິດທາງແຜນການ 05 ປີ 2022-2025 ຂອງຄະນະກຳມະການຕ້ານການຄ້າມະນຸດ ມີຜູ້ເຂົ້າຮ່ວມ 512 ຄົນ, ຍິງ 132 ຄົນ; ພ້ອມທັງສຳເລັດການຂຶ້ນແຜນວຽກປະຈຳປີ ແລະ ແຜນຊົງບປະມານປະຈຳປີ ສຳເລັດ;

1.1.10.2 ໄດ້ຈັດກອງປະຊຸມຝຶກອົບຮົມວຽກງານການເງິນໃຫ້ກອງເລຂາຄະນະກຳມະການຕ້ານການຄ້າມະນຸດນະຄອນຫຼວງວຽງຈັນ ແລະ ກອງເລຂາຄະນະກຳມະການຕ້ານການຄ້າມະນຸດ ຂັ້ນເມືອງ 09 ຕົວເມືອງ ທົ່ວນະຄອນຫຼວງວຽງຈັນ ມີຜູ້ເຂົ້າຮ່ວມທັງໝົດ 37 ຄົນ, ຍິງ 12 ຄົນ; ໄດ້ຕ້ອນຮັບການລົງຕິດຕາມ, ຊຸກຍູ້ວຽກງານສະກັດກັ້ນ ແລະ ຕ້ານການຄ້າມະນຸດ ຂອງທ່ານຮອງນາຍົກລັດຖະມົນຕີ ປະທານຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ ມີຜູ້ເຂົ້າທັງໝົດ 75 ຄົນ, ຍິງ 25 ຄົນ ໃນວັນທີ 15 ມີຖຸນາ 2022 ທີ່ສະໂມສອນແຂວງຫຼວງນ້ຳທາ; ໄດ້ຮັບເງິນຊຸກຍູ້ຈາກແຂວງ ຈຳນວນ 100.000.000 ກີບ (ໜຶ່ງຮ້ອຍລ້ານກີບ) ເພື່ອຮັບໃຊ້ເຂົ້າໃນວຽກງານຕ້ານການຄ້າມະນຸດ ໃນປີ 2022;

## 1.2. <u>ດ້ານວຽກງານການປ້ອງກັນ</u>

ບັນດາຂະແໜງການຮັບຜິດຊອບວຽກງານຕ້ານການຄ້າມະນຸດຂອງຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ, ແຂວງ, ນະຄອນຫຼວງວຽງຈັນ ແລະ ບັນດາຂະແໜງການທີ່ກ່ຽວຂ້ອງໄດ້ສຸມໃສ່ເຮັດວຽກງານປ້ອງກັນ ດ້ວຍຫຼາຍຮູບແບບ ຊຶ່ງສະແດງອອກຄື:

1.2.1 **ຂະແໜງການປ້ອງກັນຄວາມສະຫງົບ** ໄດ້ສ້າງຄວາມເຂັ້ມແຂງໃຫ້ບັນດາເຈົ້າໜ້າທີ່ຕຳຫຼວດວິຊາສະເພາະຕ່າງໆ ດ້ວຍການຈັດຝຶກອົບຮົມວຽກງານຍຸຕິທຳສຳລັບເດັກໃຫ້ແກ່ເຈົ້າໜ້າທີ່ຕຳຫຼວດທີ່ເຮັດວຽກພົວພັນກັບເດັກ ຈຳນວນ 03 ຄັ້ງ: 08 ແຂວງພາກເໜືອ ທີ່ ແຂວງ ຊຽງຂວາງ, ອຸດົມໄຊ ແລະ ແຂວງວຽງຈັນ, ໄດ້ຈັດຝຶກອົບຮົມວຽກງານຂ່າວສານໂທລະພາບ ແລະ ວິທະຍຸ ໃຫ້ແກ່ເຈົ້າໜ້າທີ່ຕຳຫຼວດ ພະແນກ 312 ແລະ ນັກຂ່າວ ປກສ ຈຳນວນ 03 ຄັ້ງ: ທີ່ແຂວງ ເຊກອງ, ແຂວງຫຼວງພະບາງ ແລະ ແຂວງບໍລິຄຳໄຊ, ໄດ້ຈັດຝຶກອົບຮົມຄູຝຶກວຽກງານຕ້ານການຄ້າມະນຸດ ໃຫ້ເຈົ້າໜ້າທີຄຸ້ມຄອງສຳມະໂນຄົວແລະກໍ່ສ້າງຮາກຖານຈຳນວນ 02 ຄັ້ງ: ໃຫ້ 05 ແຂວງ ພາກໃຕ້ ທີ່ແຂວງສາລະວັນ ແລະ ໃຫ້ 06 ແຂວງພາກເໜືອ ທີ່ແຂວງ

ອຸດົມໄຊ ມີຜູ້ເຂົ້າຮ່ວມ **325** ຄົນ, ຍິງ **56** ຄົນ; ໄດ້ລົງໂຄສະນາເຜີຍແຜ່ກົດໝາຍ, ລະບຽບການຕ່າງໆ ຢູ່ເຂດພິເສດສາມລ່ຽມຄໍາ ມີຜູ້ເຂົ້າຮ່ວມທັງໝົດ **900** ຄົນ; ໄດ້ເຂົ້າຮ່ວມເປັນວິທະຍາກອນໃຫ້ກັບຂະແໜງການຕ່າງໆ ຈຳນວນ 13 ຄັ້ງ ມີຜູ້ເຂົ້າຮ່ວມ 1.418 ຄົນ, ຍິງ 178 ຄົນ; ໄດ້ສ້າງສະປອດໂຄສະນາຕ້ານການຄ້າມະນຸດ **04** ເລື່ອງຄື: ຢ່າຫຼົງເລ່ກົນ, ເຕັ້ນໂຊເປືອຍກາຍທາງສື່ສັງຄົມອອນລາຍ, ຊອກເຮັດວຽກ (ໄປບໍ່) ແລະ ກໍລະນີແຕ່ງດອງແອບແຝງ ຫຼື ໝັ້ນໝາຍແອບແຝງ; ຜະລິດຂ່າວອອກອາກາດທາງໂທລະພາບ ປກສ ລາຍການປະຊາຮ່ວມໃຈຕ້ານໄພການຄ້າມະນຸດ ທຸກວັນເສົາ ຫາ ວັນອາທິດ ເວລາ 10:00-10:30 ໄດ້ 53 ຄັ້ງ; ຜະລິດວິທະຍຸ ປກສ ອອກອາກາດ ເວລາ 07:30-08:30 ໂມງ ທຸກວັນເສົາ ຫາ ວັນອາທິດ ທາງຄື້ນວິທະຍຸ FM 101,5 MHz ໄດ້ 106 ຄັ້ງ ແລະ ອອກອາກາດທາງວິທະຍຸກອງທັບ ໄດ້ **470** ຄັ້ງ; ໄດ້ສ້າງ ແລະ ລົງໂຄສະນາຕາມ ເພຈ Facebook ປະຊາຮ່ວມໃຈຕ້ານໄພການຄ້າມະນຸດ ມີຜູ້ຕິດຕາມ 2.638 ຄົນ, ຊ່ອງ YouTube ມີຜູ້ຕິດຕາມ 2.405 ຄົນ, ໂຄສະນາຜ່ານແອັບຕິກຕອກ ມີຜູ້ຕິດຕາມ 10.314 ຄົນ; ໄດ້ນໍາເອົາຂໍ້ມູນບັນດາການເຄື່ອນໄຫວວຽກງານຕ້ານການຄ້າມະນຸດ, ໂຄສະນາສັ້ນ, ລະຄອນ, ນິຕິກໍາ ແລະ ອື່ນໆທີ່ກ່ຽວຂ້ອງ ລົງເຜີຍແຜ່ໃນເວັບໄຊ້ທາງການ ຂອງຄະນະກໍາມະການຕ້ານການຄ້າມະນຸດລະດັບຊາດ (laosncatip.gov.la) ຢ່າງເປັນປະຈໍາ, ເຊິ່ງໃນໄລຍະ **01** ປີຜ່ານມາ ເຫັນໄດ້ວ່າສັງຄົມແມ່ນໃຫ້ຄວາມສົນໃຈ ແລະ ມີຜູ້ເຂົ້າຊົມ ຈຳນວນ 6.771 ຄັ້ງ;

1.2.2 **ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ** ໄດ້ສໍາເລັດຈັດຝຶກອົບຮົມຄູຝຶກວຽກງານປ້ອງກັນ ແລະ ຊ່ວຍເຫຼືອກຸ່ມສ່ຽງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃຫ້ແກ່ຄະນະກຳມະການປົກປ້ອງ ແລະ ຊ່ວຍເຫຼືອເດັກຂັ້ນເມືອງ **10** ເມືອງ ແລະ ຄະນະຕາໜ່າງປົກປ້ອງເດັກຂັ້ນບ້ານ **80** ບ້ານ ທີ່ແຂວງ ວຽງຈັນ, ຫຼວງພະບາງ, ອຸດົມໄຊ, ສະຫວັນນະເຂດ, ຄໍາມ່ວນ, ເຊກອງ ແລະ ສາລະວັນ ມີຜູ້ເຂົ້າຮ່ວມທັງໝົດ 720 ຄົນ, ຍິງ 232 ຄົນ ແລະ ໄດ້ແຈກຢາຍແຜ່ນພັບໂຄສະນາກ່ຽວກັບການໄປເຮັດວຽກຢູ່ຕ່າງປະເທດແບບຖືກກົດໝາຍໃຫ້ແກ່ສູນຈຳກັດບໍລິເວນ ແຂວງ ຈໍາປາສັກ ເພື່ອແຈກຢາຍໃຫ້ແກ່ແຮງງານ ຈຳນວນ 5.316 ແຜ່ນ; ໄດ້ສໍາເລັດກອງປະຊຸມປຶກສາຫາລືກ່ຽວກັບການຢຸດຕິຄວາມຮຸນແຮງ ແລະ ການລ່ວງລະເມີດທາງເພດ ຢູ່ສະຖານທີ່ເຮັດວຽກ (C190) , ຈັດກອງປະຊຸມເຄືອຂ່າຍແຮງງານເຄື່ອນຍ້າຍ ເພື່ອຖອດຖອນ ແລະ ແລກປ່ຽນບົດຮຽນໃນການຈັດຕັ້ງປະຕິບັດກິດຈະກໍາທີ່ຜ່ານມາ ພ້ອມທັງຄົ້ນຄວ້າປຶກສາຫາລື ແລະ ໂອກະພາບໃນການກໍານົດແຜນໃນຕໍ່ໜ້າ ມີຜູ້ເຂົ້າຮ່ວມແບບເຊິ່ງໜ້າ ແລະ ແບບທາງໄກ ແລະ ກອງປະຊຸມປຶກສາຫາລືການປະຕິບັດມາດຕະການຕໍ່ບັນດານິຕິບຸກຄົນທີ່ຈັດສົ່ງຜູ້ອອກແຮງງານໄປເຮັດວຽກຢູ່ຕ່າງປະເທດແບບບໍ່ຖືກຕ້ອງ ມີຜູ້ເຂົ້າຮ່ວມ **85** ຄົນ, ຍິງ **38** ຄົນ; ໄດ້ສໍາເລັດການເປີດສູນຂໍ້ມູນ-ຂ່າວສານ ສໍາລັບແຮງງານເຄື່ອນຍ້າຍ ທີ່ ແຂວງ ບໍລິຄໍາໄຊ; ໄດ້ສໍາເລັດການລົງເຜີຍແຜ່ດໍາລັດວ່າດ້ວຍການຈັດສົ່ງແຮງງານລາວໄປເຮັດວຽກຢູ່ຕ່າງປະເທດ ສະບເລກທີ **245**/ນຍ ແລະ ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງວິສາຫະກິດບໍລິການຈັດຫາງານ ສະບັບເລກທີ 1050/ຮສສ ໃຫ້ພະແນກແຮງງານ ແລະ ສະຫວັດດີການສັງຄົມ ຈຳນວນ 02 ຄັ້ງ ໃຫ້ບັນດາແຂວງພາກກາງ ແລະ ພາກໃຕ້ ທີ່ແຂວງສະຫວັນນະເຂດ ແລະ ໃຫ້ບັນດາແຂວງພາກເໜືອ ທີ່ແຂວງວຽງຈັນ ມີຜູ້ເຂົ້າຮ່ວມ 87 ຄົນ, ຍິງ 15 ຄົນ;

1.2.3 **ສູນກາງສະຫະພັນແມ່ຍິງລາວ** ຈັດກອງປະຊຸມຝຶກອົບຮົມສ້າງຄວາມເຂັ້ມແຂງໃຫ້ສະຫະພັນແມ່ຍິງແຂວງ ແລະ ນະຄອນຫຼວງວຽງຈັນ ກ່ຽວກັບການໃຫ້ຄໍາປຶກສາແບບເຄື່ອນທີ່ ແລະ ການໂຄສະນາປຸກຈິດສໍານຶກການຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ (ສະຫວັນນະເຂດ, ຈໍາປາສັກ, ອັດຕະປື ແລະ ນະຄອນຫຼວງວຽງຈັນ) ທີ່ແຂວງຈໍາປາສັກ, ໄດ້ຈັດກອງປະຊຸມຝຶກອົບຮົມເຕັກນິກການໃຫ້ຄໍາປຶກສາ ແລະ ສຸຂະພາບຈິດ/ການສະໜັບສະໜູນດ້ານຈິດໃຈໃຫ້ແກ່ພະນັກງານສະຫະພັນແມ່ຍິງ ແລະ ພາກສ່ວນກ່ຽວຂ້ອງຂັ້ນແຂວງ ແລະ ຂັ້ນເມືອງຂອງແຂວງ ທີ່ແຂວງຊຽງຂວາງ ມີຜູ້ເຂົ້າຮ່ວມທັງໝົດ **70** ຄົນ, ຍິງ **59** ຄົນ; ລົງໂຄສະນາວຽກງານສາຍດ່ວນ ແລະ ການຕ້ານການຄ້າມະນຸດ, ຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ-ເດັກ ຈຳນວນ **05** ຄັ້ງ: ຢູ່ສູນຟື້ນຟູຜູ້ຕິດເຊື້ອໂຄວິດທີ່ເປັນແມ່ມານ/ແມ່ລູກອ່ອນ ຢູ່ໂຮງໝໍຊຸມຊົນເມືອງປາກງື່ມ ແລະ ບັນດາເມືອງ ທີ່ຢູ່ ນະຄອນຫຼວງວຽງຈັນ ແລະ ມະຫາວິທະຍາໄລແຫ່ງຊາດ ຄະນະນິຕິສາດ ແລະ ລັດຖະສາດ

ແລະ ໄດ້ລົງໂຄສະນາປູກຈິດສຳນຶກກ່ຽວກັບການຄ້າມະນຸດ ແລະ ການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ **02** ຄັ້ງ: ທີ່ຄະນະວິທະຍາສາດສັງຄົມສາດ ແລະ ຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ ແລະ ແຂວງອຸດົມໄຊ ມີຜູ້ເຂົ້າຮ່ວມ **5,439** ຄົນ, ຍິງ **4,008** ຄົນ; ໄດ້ຈັດກິດຈະກຳໃຫ້ຄວາມຮູ້ພື້ນຖານທາງດ້ານກົດໝາຍແກ່ຜູ້ຖືກເຄາະຮ້າຍ ຈຳນວນ **02** ຄັ້ງ: ທີ່ສູນພັກເຊົາໃນສູນ ມີຜູ້ຖືກເຄາະຮ້າຍເຂົ້າຮ່ວມ **14** ຄົນ ເປັນຍິງທັງໝົດ; ໄດ້ຈັດກິດຈະກຳລະນຶກວັນສາກົນເພື່ອຕ້ານການຄ້າມະນຸດ **30** ກໍລະກົດປະຈຳປີ **2022** ຈຳນວນ **02** ຄັ້ງ: ທີ່ວິທະຍາໄລເຕັກນິກປາກປ່າສັກ ແລະ ສູນການຝຶກອົບຮົມ ແລະ ການຮ່ວມມືສາກົນການນຳໃຊ້ເຕັກໂນໂລຊີກັບການຄ້າມະນຸດ ມີຜູ້ເຂົ້າຮ່ວມ **500** ຄົນ, ຍິງ **386** ຄົນ;

1.2.4 **ຂະແໜງການ ການຕ່າງປະເທດ** ໄດ້ຈັດກອງປະຊຸມເຜີຍແຜ່ ກ່ຽວກັບການຈັດຕັ້ງປະຕິບັດສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ, ກົດໝາຍ ແລະ ນິຕິກຳ ພາຍໃນທີ່ກ່ຽວກັບການຕ້ານການຄ້າມະນຸດ ສຳລັບເຈົ້າໜ້າທີ່ທີ່ກ່ຽວຂ້ອງຂອງແຂວງ ແລະ ເມືອງ **02** ຄັ້ງ: ທີ່ ແຂວງອຸດົມໄຊ ແລະ ແຂວງຄຳມ່ວນ ມີຜູ້ເຂົ້າຮ່ວມ **170** ຄົນ, ຍິງ **68** ຄົນ; ໄດ້ສຳເລັດການຝຶກອົບຮົມ ກ່ຽວກັບການຈັດຕັ້ງປະຕິບັດສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ, ກົດໝາຍ ແລະ ນິຕິກຳ ກ່ຽວກັບການຕ້ານການຄ້າມະນຸດ ສຳລັບເຈົ້າໜ້າທີ່ ທີ່ກ່ຽວຂ້ອງ, ພະນັກງານກະຊວງການຕ່າງປະເທດ ແລະ ຄະນະພົວພັນສູນກາງພັກ ທີ່ຖືກແຕ່ງຕັ້ງ ແລະ ມີເປົ້າໝາຍຖືກແຕ່ງຕັ້ງໄປປະຈຳການຢູ່ສຳນັກງານຜູ້ຕາງໜ້າແຫ່ງ ສປປ ລາວ ປະຈຳຢູ່ຕ່າງປະເທດ ຈຳນວນ **01** ຄັ້ງ: ທີ່ກະຊວງການຕ່າງປະເທດ ມີຜູ້ເຂົ້າຮ່ວມ 67 ຄົນ, ຍິງ 23 ຄົນ;

1.2.5 **ຂະແໜງການຍຸຕິທຳ** ໄດ້ໂຄສະນາກົດໝາຍ ແລະ ສະປອດກ່ຽວກັບຕ້ານການຄ້າມະນຸດ ຜ່ານທາງ ວິທະຍຸກະຈາຍສຽງແຫ່ງຊາດລາວ, ລາຍການຄວາມຮູ້ທາງດ້ານກົດໝາຍ ທາງລະບົບ FM 103.7 MKz ເວລາ 14:30 ຫາ 15:00 ພາກພາສາລາວ ໄດ້ **25** ຄັ້ງ ໃນນັ້ນ ໂຄສະນາສະປອດໂຄສະນາ ເລື່ອງ ຫຼົງກົນລວງ ຈຳນວນ 21 ຄັ້ງ ແລະ ພາກ ພາສາຊົນເຜົ່າ ໃນລະບົບ AM 92.0 MKz ເວລາ 12:30 ຫາ 13:00 ໄດ້ **10** ຄັ້ງ; ໄດ້ອອກຂ່າວການເຄື່ອນໄຫວວຽກງານເຜີຍແຜ່ກົດໝາຍກ່ຽວກັບການສະກັດກັ້ນ ແລະ ຕ້ານການຄ້າມະນຸດ ທາງສະຖານີ ໂທລະພາບ ປກສ ໃນລາຍການ ເພື່ອສັງຄົມຍຸຕິທຳ ໄດ້ **03** ຂ່າວ, ໂຄສະນາຮູບເງົາຮັກແທ້ທີ່ບ້ານເຮົາ 10 ຄັ້ງ, ສະປອດ ການເອົາເດັກໃຫ້ຄົນອື່ນໄປເປັນລູກລ້ຽງ **06** ຄັ້ງ, ບັງຄັບໃຫ້ເປັນໂສເພນີ **07** ຄັ້ງ ແລະ ການຄ້າມະນຸດໃນຮູບແບບການແຕ່ງດອງ **08** ຄັ້ງ; ໄດ້ສົມທົບກັບກະຊວງ ຖວທ ສ້າງລາຍການວິທະຍຸກະຈາຍສຽງພາກພາສາກຶມມຸເປັນລາຍການກົດໝາຍ ອອກອາກາດເວລາ **14:30** ຫາ **15:00** ຄື້ນ AM 567 KHz ທາງສະຖານນີວິທະຍຸກະຈາຍສຽງແຫ່ງຊາດ; ໄດ້ສຳເລັດການຖ່າຍທຳລະຄອນສັ້ນ ເລື່ອງ ສິດທີ່ໄດ້ຮັບການປົກປ້ອງ; ໄດ້ຂຽນ ແລະ ອອກຂ່າວການເຄື່ອນໄຫວວຽກງານສະກັດກັ້ນ ແລະ ຕ້ານການຄ້າມະນຸດ ເພື່ອເຜີຍແຜ່ລົງໃນໜັງສືພິມກົດໝາຍ ອອນລາຍ ໄດ້ 03 ຂ່າວ, ເຜີຍແຜ່ປະມວນກົດໝາຍອາຍາ ທາງໜັງສືພິມກົດໝາຍ (Facebook) ໄດ້ 06 ຄັ້ງ; ໄດ້ແຈກຢາຍປຶ້ມປະມວນກົດໝາຍອາຍາ ໃຫ້ພາກສ່ວນຕ່າງໆ ອ້ອມຂ້າງສູນກາງ ແລະ ທ້ອງຖິ່ນ ຈຳນວນ 180 ຫົວ; ໄດ້ແຈກຢາຍປຶ້ມສັງລວມກົດໝາຍ ສ້າງໃໝ່ ແລະ ປັບປຸງ 2018 ໃຫ້ພາກສ່ວນຕ່າງໆ ອ້ອມຂ້າງສູນກາງ ຈຳນວນ 680 ຫົວ; ແຈກຢາຍແຜ່ນໂປຣສະເຕີກ່ຽວກັບການສະກັດກັ້ນ ແລະ ຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ຈຳນວນ 192 ແຜ່ນ, ແຜ່ນຕັ້ງໂຄສະນາກ່ຽວກັບການຊ່ວຍເຫຼືອທາງດ້ານກົດໝາຍ ຈຳນວນ 01 ແຜ່ນ; ແຜ່ນໂຄສະນານິຕິກຳ ຈຳນວນ 05 ແຜ່ນ; ໄດ້ເອົານິຕິກຳໃຕ້ກົດໝາຍລົງແອບພິເຄຊັ້ນກົດໝາຍ 19 ສະບັບ, ໃນນັ້ນ, ນິຕິກຳກ່ຽວຂ້ອງກັບການຕ້ານການຄ້າມະນຸດ ມີກົດໝາຍວ່າດ້ວຍການປະຕິບັດຄຳຕັດສິນຂອງສານ; ໄດ້ເອົານິຕິກຳໃຕ້ກົດໝາຍລົງຈົດໝາຍເຫດທາງການ ແລະ ແອັບກົດໝາຍ **23** ສະບັບ; ໄດ້ຈັດຝຶກອົບຮົມ ຜ່ານລະບົບອອນລາຍກ່ຽວກັບຄວາມສະດຸ້ງໄວຕໍ່ບົດບາດຍິງ-ຊາຍກ່ຽວກັບໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ມີຜູ້ເຂົ້າຮ່ວມ 59 ຄົນ, ຍິງ 21 ຄົນ; ໄດ້ຈັດຝຶກອົບຮົມການຕັດຕໍ່ລາຍການວິທະຍຸ ແລະ ການນຳໃຊ້ເຄື່ອງມືສື່ສານໃຫ້ພະນັກງານກົມໂຄສະນາ ມີຜູ້ເຂົ້າຮ່ວມ **20** ຄົນ ຍິງ **08** ຄົນ; ໄດ້ສຳເລັດການຈັດກອງປະຊຸມປຶກສາຫາລືກ່ຽວກັບສຳນວນຄຳຮ້ອງຂໍການເອົາເດັກໄປເປັນລູກລ້ຽງ **02** ສຳນວນ ຢູ່ກະຊວງຍຸຕິທຳ ມີຜູ້ເຂົ້າຮ່ວມ 12 ຄົນ, ຍິງ 05 ຄົນ; ໄດ້ສຳເລັດກອງປະຊຸມເຜີຍແຜ່ກົດໝາຍ ແລະ ນິຕິກຳ

ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານການຄ້າມະນຸດ ໃຫ້ແກ່ພະນັກງານຂະແໜງການຍຸຕິທຳແຂວງ 03
ຄັ້ງ: ແຂວງວຽງຈັນ, ແຂວງຊຽງຂວາງ ແລະ ແຂວງບໍລິຄຳໄຊ, ຈັດກອງປະຊຸມການສຳຫຼວດການເຂົ້າເຖິງ
ການຊ່ວຍເຫຼືອທາງດ້ານກົດໝາຍ ທີ່ໂຮງແຮມ ລາວພາຊ່າ, ຈັດກອງປະຊຸມເປີດນຳໃຊ້ແບບຟອມເກັບກຳ
ສະຖິຕິວຽກງານໂຄສະນາເຜີຍແຜ່ກົດໝາຍທັງແບບອອນລາຍ ແລະ ເຊື່ອງໜ້າຮ່ວມກັບບັນດາພະແນກຍຸຕິ
ທຳ 17 ແຂວງ, ຫ້ອງການຍຸຕິທຳເມືອງ 145 ເມືອງ ແລະ 03 ນະຄອນ ທີ່ກະຊວງຍຸຕິທຳ, ຈັດກອງປະຊຸມ
ປະກອບຄຳເຫັນໃສ່ຮ່າງວີດີໂອກາຕູນ, ສຽງພາກ ກ່ຽວກັບດຳລັດໂຄສະນາເຜີຍແຜ່ນິຕິກຳ ມີຜູ້ເຂົ້າຮ່ວມທັງ
ໝົດ 474 ຄົນ, ຍິງ 129 ຄົນ; ໄດ້ລົງຕິດຕາມ ແລະ ກະກຽມຄວາມພ້ອມໃຫ້ແກ່ການເປີດຫ້ອງ
ການຈັດຕັ້ງໃຫ້ການຊ່ວຍເຫຼືອທາງດ້ານກົດໝາຍ ຢູ່ຂັ້ນເມືອງ ແຂວງບໍ່ແກ້ວ; ໄດ້ຈັດຝຶກອົບຮົມການນຳໃຊ້
ເວັບໄຊສ໌ການຊ່ວຍເຫຼືອທາງດ້ານກົດໝາຍ 03 ຄັ້ງ: ທີ່ແຂວງເຊກອງ, ອັດຕະປື ແລະ ສະຫວັນນະເຂດ ມີ
ຜູ້ເຂົ້າຮ່ວມ 21 ຄົນ, ຍິງ 07 ຄົນ; ໄດ້ລົງໂຄສະນາເຜີຍແຜ່ກົດໝາຍ ແລະ ການປະຕິບັດຄຳຕັດສິນຂອງ
ສານໃຫ້ພະນັກງານອ້ອມຂ້າງແຂວງ ຈຳນວນ 10 ຄັ້ງ: ທີ່ແຂວງໄຊສົມບູນ, ແຂວງຄຳມ່ວນ, ຫົວພັນ, ຜົ້ງ
ສາລີ, ຫຼວງນໍ້າທາ, ໄຊຍະບູລີ, ສະຫວັນນະເຂດ, ອຸດົມໄຊ, ຊຽງຂວາງ, ບໍ່ແກ້ວ ມີຜູ້ເຂົ້າຮ່ວມ 1,336 ຄົນ,
ຍິງ 323 ຄົນ; ໄດ້ເປີດຊຸດຝຶກອົບຮົມທົດລອງຫຼັກສູດຝຶກອົບຮົມທັກສະການສ້າງນິຕິກຳ ຢູ່ສະຖາບັນຍຸຕິທຳ
ມີຜູ້ເຂົ້າຮ່ວມ 60 ຄົນ, 14 ຄົນ; ໄດ້ສຳເລັດການຈົດທະບຽນຂໍເອົາເດັກໄປເປັນລູກລ້ຽງຂອງຄົນ
ຕ່າງປະເທດ ຈຳນວນ 04 ສຳນວນ, ໃນນີ້ມີ ສັນຊາດອາເມລິກາ 03 ສຳນວນ ແລະ ສັນຊາດຝຣັ່ງ 01 ສຳ
ນວນ; ໄດ້ສຳເລັດການລົງຕິດຕາມ, ກວດກາ ຄອບຄົວຕ່າງປະເທດ ພາຍຫຼັງທີ່ລັດຖະບານ ແຫ່ງ ສປປ ລາວ
ໄດ້ອະນຸມັດໃຫ້ເດັກໄປເປັນລູກລ້ຽງຂອງຄົນຕ່າງປະເທດ ທີ່ດຳລົງຊີວິດຢູ່ ສປປ ລາວ ຈຳນວນ 03
ຄອບຄົວ ໃນນີ້ ມີສັນຊາດຝຣັ່ງ 01 ຄອບຄົວ, ສັນຊາດອາເມລິກາ 01 ຄອບຄົວ ແລະ ສັນຊາດການາດາ
01 ຄອບຄົວ; ໄດ້ສຳເລັດການປະຕິບັດຄຳຕັດສິນຂອງສານ ທົ່ວປະເທດທັງໝົດ 03 ຄະດີ, ກຳລັງຄົ້ນຄວ້າ
109 ຄະດີ, ບໍ່ມີເງື່ອນໄຂປະຕິບັດ 09 ຄະດີ; ໄດ້ສຳເລັດການຈັດຝຶກອົບຮົມວຽກງານການເອົາເດັກໄປເປັນ
ລູກລ້ຽງໃຫ້ແກ່ຄະນະຮັບຜິດຊອບພິຈາລະນາການເອົາເດັກໄປເປັນລູກລ້ຽງຂັ້ນສູນກາງ ທີ່ກະຊວງຍຸຕິທຳ ມີ
ຜູ້ເຂົ້າຮ່ວມ 20 ຄົນ, ຍິງ 07 ຄົນ; ໄດ້ສຳເລັດການລົງເກັບກຳຂໍ້ມູນ ເພື່ອປະກອບເຂົ້າໃນການປັບປຸງກົດ
ໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຢູ່ແຂວງຈຳປາສັກ, ສະຫວັນນະເຂດ, ຫຼວງ
ພະບາງ, ໄຊະບູລີ, ບໍລິຄຳໄຊ, ວຽງຈັນ ແລະ ນະຄອນຫຼວງວຽງຈັນ ມີຜູ້ເຂົ້າຮ່ວມ 245 ຄົນ, ຍິງ 150 ຄົນ;
ໃຫ້ຄຳປຶກສາທາງດ້ານກົດໝາຍໂດຍບໍ່ໄດ້ເສຍຄ່າ ກ່ຽວກັບການຂໍເອົາເດັກໄປເປັນລູກລ້ຽງ 35 ຄັ້ງ; ໄດ້ຈັດ
ຝຶກອົບຮົມວຽກງານຈົດໝາຍເຫດທາງລັດຖະການ ໃຫ້ບັນດາຜູ້ປະສານງານຂັ້ນສູນກາງ ໄດ້ 02 ຊຸດ ມີຜູ້
ເຂົ້າຮ່ວມ 120 ຄົນ, ຍິງ 32 ຄົນ; ໄດ້ລົງໂຄສະນານິຕິກຳ ໃຫ້ພະນັກງານຂະແໜງການຕ່າງໆ ຈຳນວນ 03
ຄັ້ງ: ທີ່ແຂວງບໍລິຄຳໄຊ, ໄຊຍະບູລີ, ສະຫ້ວນນະເຂດ ມີຜູ້ເຂົ້າຮ່ວມ 217 ຄົນ, ຍິງ 54 ຄົນ; ໄດ້ຈັດຝຶກ
ອົບຮົມທັກສະການໂຄສະນາເຜີຍແຜ່ກົດໝາຍ ທີ່ສະຖາບັນຍຸຕິທຳແຫ່ງຊາດ ມີຜູ້ເຂົ້າຮ່ວມ 20 ຄົນ, ຍິງ
09 ຄົນ; ໄດ້ຝຶກອົບຮົມໂຄສົກວິທະຍຸ ພາກພາສາກຶມມຸ ທີ່ສະຖານີວິທະຍຸກະຈາຍສຽງແຫ່ງຊາດ ມີຜູ້ເຂົ້າ
ຮ່ວມ 02 ຄົນ; ໄດ້ອອກໃບຢັ້ງຢືນການເອົາເດັກໄປເປັນລູກລ້ຽງຂອງຄົນຕ່າງປະເທດ 03 ສະບັບ; ໄດ້
ເຜີຍແຜ່ບາງເນື້ອໃນກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ໃຫ້ແກ່ພະນັກງານ-ລັດຖະກອນພາຍໃນ
ກະຊວງ ມີຜູ້ເຂົ້າຮ່ວມ 102 ຄົນ, ຍິງ 36 ຄົນ; ໄດ້ລົງຕິດຕາມ, ຊຸກຍູ້ການຈັດຕັ້ງປະຕິບັດວຽກງານປ້ອງ
ກັນ ແລະ ການແກ້ໄຂການກະທຳຜິດຂອງເດັກໂດຍບໍ່ສົ່ງໃຫ້ສານຕັດສິນ ທີ່ແຂວງຊຽງຂວາງ ແລະ ສະຫວັນ
ນະເຂດ ມີຜູ້ເຂົ້າຮ່ວມ 261 ຄົນ, ຍິງ 134 ຄົນ; ໄດ້ເປີດຫ້ອງການການຊ່ວຍເຫຼືອທາງດ້ານກົດໝາຍ
ປະຈຳເມືອງ ທີ່ແຂວງຄຳມ່ວນ ແລະ ບໍລິຄຳໄຊ ລວມມີ 09 ເມືອງ ມີຜູ້ເຂົ້າຮ່ວມ 974 ຄົນ, ຍິງ 361 ຄົນ;
ໄດ້ຈັດຝຶກອົບຮົມວຽກງານຊ່ວຍເຫຼືອທາງດ້ານກົດໝາຍ ໃຫ້ແກ່ພະນັກງານຜູ້ຮັບຜິດຊອບຂັ້ນສູນກາງ ແລະ
ທ້ອງຖິ່ນ (ກະຊວງຍຸຕິທຳ, ແຂວງ ບໍ່ແກ້ວ, ຫຼວງນໍ້າທາ, ບໍລິຄຳໄຊ, ຄຳມ່ວນ ແລະ 03 ເມືອງຂອງແຂວງ
ວຽງຈັນ) ທີ່ແຂວງວຽງຈັນ ມີຜູ້ເຂົ້າຮ່ວມ 48 ຄົນ, ຍິງ 08 ຄົນ; ໄດ້ຈັດຝຶກອົບຮົມວຽກງານຈົດໝາຍເຫດ
ທາງລັດຖະການ ໃຫ້ຜູ້ປະສານງານຂັ້ນແຂວງພາກໃຕ້ ທີ່ແຂວງຈຳປາສັກ ມີຜູ້ເຂົ້າຮ່ວມ 60 ຄົນ, ຍິງ 12
ຄົນ;

1.2.6 **ຂະແໜງການສາທາລະນະສຸກ** ໄດ້ແຈກຢາຍໂປສະເຕີ້ ຈຳນວນ 112 ແຜ່ນ, ແຜ່ນພັບ ຈຳນວນ 112 ແຜ່ນ, ປຶ້ມກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ຈຳນວນ 50 ຫົວ, ປຶ້ມຄູ່ມືການກຳນົດຕົວຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຈຳນວນ **50** ຫົວ ແລະ ປຶ້ມຄູ່ມືການປົກປ້ອງຊ່ວຍເຫຼືອ ແລະ ສິ່ງຕໍ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຈຳນວນ **113** ຫົວ, ເພື່ອໄປແຈກຢາຍໃຫ້ຄະນະປະສານງານຕ້ານການຄ້າມະນຸດ **06** ແຂວງພາກກາງ ຂອງຂະແໜງສາທາລະນະສຸກ;

1.2.7 **ຂະແໜງການສຶກສາທິການ ແລະ ກິລາ** ໄດ້ຈັດກອງປະຊຸມສ້າງຄວາມເຂັ້ມແຂງ ໃຫ້ແກ່ສະມາຊິກກອງເລຂາຄະນະກຳມະການຕ້ານການຄ້າມະນຸດ ຂັ້ນແຂວງ, ຂັ້ນເມືອງ ແລະ ຜູ້ຮັບຜິດຊອບວຽກງານຕ້ານການຄ້າມະນຸດ ໃນຂະແໜງການສຶກສາ ແລະ ກິລາ ທີ່ພະແນກສຶກສາທິການ ແລະ ກິລາ ຈຳນວນ **12** ແຂວງ: ແຂວງອັດຕະປື, ເຊກອງ, ຄຳມ່ວນ, ຜົ້ງສາລີ, ຫຼວງນ້ຳທາ, ອຸດົມໄຊ, ບໍ່ແກ້ວ, ຫຼວງພະບາງ, ໄຊຍະບູລີ, ຫົວພັນ, ຊຽງຂວາງ ແລະ ໄຊສົມບູນ ມີຜູ້ເຂົ້າຮ່ວມ 338 ຄົນ, ຍິງ **61** ຄົນ; ມອບ-ຮັບ ປຶ້ມອ່ານເສີມ ແລະ ຄູ່ມືແນະນຳການສອນ ການຕ້ານການຄ້າມະນຸດ ຊັ້ນມັດທະຍົມສຶກສາຕອນຕົ້ນ ແລະ ຕອນປາຍ ເພື່ອຮັບໃຊ້ຈັດການຮຽນການສອນ ຈຳນວນ **12** ແຂວງທົ່ວປະເທດ ລວມມູນຄ່າທັງໝົດ 1.584.161.840 ກີບ; ໄດ້ໂຄສະນາເຜີຍແຜ່ວຽກງານຕ້ານການຄ້າມະນຸດ ຜູ້ບໍລິຫານການສຶກສາ ແລະ ກິລາທຸກຂັ້ນ ໃນຂະແໜງການສຶກສາ ແລະ ກິລາ ທົ່ວປະເທດ ແບບເຊິ່ງໜ້າ ແລະ ອອນລາຍ ທີ່ກະຊວງສຶກສາທິການ ແລະ ກິລາ ມີຜູ້ເຂົ້າຮ່ວມ 900 ຄົນ, ຍິງ 342 ຄົນ; ໄດ້ສຳເລັດຝຶກອົບຮົມການນຳໃຊ້ປຶ້ມອ່ານເສີມ ແລະ ຄູ່ມືແນະນຳການສອນການຕ້ານການຄ້າມະນຸດ ຊັ້ນມັດທະຍົມສຶກສາຕອນຕົ້ນ ແລະ ຕອນປາຍ ໃຫ້ແກ່ຄູສອນວິຊາສຶກສາພົນລະເມືອງ ທີ່ພະແນກສຶກສາທິການ ແລະ ກິລາ ແຂວງຫຼວງນ້ຳທາ ມີຜູ້ເຂົ້າຮ່ວມ **191** ຄົນ, ຍິງ **48** ຄົນ.

1.2.8 **ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ** ໄດ້ສຳເລັດການຈັດຝຶກອົບຮົມ ວຽກງານສະກັດກັ້ນ ແລະ ຕ້ານການຄ້າມະນຸດ ໃຫ້ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ຽວທ່ອງ ຈຳນວນ **05** ຄັ້ງ: ທີ່ແຂວງໄຊສົມບູນ, ອຸດົມໄຊ, ຄຳມ່ວນ, ສາລະວັນ ແລະ ສະຫວັນນະເຂດ ແລະ ໄດ້ຈັດຝຶກອົບຮົມການສ້າງສື່ໂຄສະນາ, ຜະລິດຕະພັນສື່ມວນຊົນ ໃຫ້ຂະແໜງການຖະແຫຼງຂ່າວ ແລະ ວັດທະນະທຳ ທີ່ແຂວງຈຳປາສັກ ມີຜູ້ເຂົ້າຮ່ວມທັງໝົດ **303** ຄົນ, ຍິງ **144** ຄົນ;

1.2.9 **ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ** ໄດ້ຈັດກິດຈະກຳຖາມ-ຕອບ ໃຫ້ຊາວໜຸ່ມເຍົາວະຊົນ ກ່ຽວກັບວຽກງານຕ້ານການຄ້າມະນຸດ ທາງລາຍການວິທະຍຸຊອງຊາວໜຸ່ມຍຸກໃໝ່ຄື້ນ FM 90.00 ແລະ ຜ່ານຊອງທາງອອນລາຍ ມີຜູ້ເຂົ້າຮ່ວມ **55** ຄົນ, ຍິງ **20** ຄົນ, ໄດ້ສຳເລັດການຈັດຝຶກອົບຮົມວຽກງານຕ້ານການຄ້າມະນຸດ ໃຫ້ແກ່ພະນັກງານຮັບຜິດຊອບວຽກງານຊາວໜຸ່ມ-ເຍົາວະຊົນ ທົ່ວແຂວງວຽງຈັນ ມີຜູ້ເຂົ້າຮ່ວມ **65** ຄົນ, ຍິງ **45** ຄົນ; ໄດ້ຮັບສາຍດ່ວນຂອງບັນດາຊາວໜຸ່ມທີໂທເຂົ້າມາຂໍຄຳປຶກສາເຂົ້າມາ ເບີ 1554 ໃນເລື່ອງຕ່າງໆ ຈຳນວນ 236 ຄົນ ຍິງ 158; ໄດ້ສຳເລັດໃນການຈັດໂຄສະນາເຜີຍແຜ່ວຽກງານຕ້ານການຄ້າມະນຸດໃຫ້ກັບ ຊາວໜຸ່ມ-ເຍົາວະຊົນ ທີມາເຂົ້າຮ່ວມຝຶກອົບຮົມວຽກງານຕ້ານເອດ ຢູ່ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ມີຜູ້ເຂົ້າຮ່ວມທັງໝົດ **65** ຄົນ, ຍິງ **30** ຄົນ;

1.2.10 **ສູນກາງສະຫະພັນກຳມະບານລາວ** ໄດ້ຈັດຝຶກອົບຮົມສ້າງຄວາມເຂັ້ມແຂງ ກ່ຽວກັບວຽກງານສະກັດກັ້ນ-ຕ້ານການຄ້າມະນຸດ ແລະ ວຽກງານປົກປ້ອງສິດຜົນປະໂຫຍດອັນຊອບທຳຂອງຜູ້ອອກແຮງງານໃຫ້ແກ່ພະນັກງານຂອງສະຫະພັນກຳມະບານ ແຂວງ, ເມືອງ ແລະ ກຳມະບານຮາກຖານໂຮງຈັກ-ໂຮງງານ ຈຳນວນ **05** ຄັ້ງ: ທີ່ແຂວງບໍ່ແກ້ວ, ວຽງຈັນ, ສະຫວັນນະເຂດ, ອຸດົມໄຊ ແລະ ອັດຕະປື ມີຜູ້ເຂົ້າຮ່ວມ **310** ຄົນ, ຍິງ **93** ຄົນ; ໄດ້ລົງເຜີຍແຜ່ໂຄສະນາ ແລະ ປູກຈິດສຳນຶກດ້ານການເຄື່ອນຍ້າຍແຮງງານແບບປອດໄພ, ຕ້ານການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ການຄ້າມະນຸດ ໄດ້ຈຳນວນ 15 ຄັ້ງ: ໂຮງງານຕັດຫຍິບປີຄອບເພີເຣດ, ໂຮງງານລ້ານຊ້າງຈຳກັດຜູ້ດຽວ, ໂຮງງານ ເວັນເຈີ ບ້ານໃສນ້ຳເງິນ, ໂຮງງານຕັດຫຍິບລາວອັບປາແລນ, ສະຖາບັນພັດທະນາສີມືແຮງງານ ລາວ-ເກົາຫລີ, ສູນຝຶກອົບຮົມວິຊາຊີບຊາວໜຸ່ມດອນບອສໂກ, ສູນພັດທະນາສີມືແຮງງານ, ໂຮງງານເກືອເວີນຄຳ, ວິທະຍາໄລເຕັກນິກປາກປ່າສັກ, ໂຮງງານ ບໍລິສັດໄຊ

ເທັກ, ວິທະຍາໄລເຕັກນິກດົງຄໍາຊ້າງ, ໂຮງງານ ບໍລິສັດສີລິວັດທະນາ, ໂຮງງານມານີ່, ໂຮງງານຕັດຫຍິບ ຣັກເກີ ອິນເຕີໄປ, ໂຮງງານລາວຊິຊິນ, ມີຜູ້ເຂົ້າຮ່ວມ 4,382 ຄົນ; ຍິງ 3,394 ຄົນ; ໄດ້ສໍາເລັດການຈັດກອງປະຊຸມ ແລະ ເຜີຍແຜ່ກ່ຽວກັບການນໍາໃຊ້ແຮງງານເດັກທີ່ຖືກຕ້ອງ ຢູ່ 03 ແຂວງ: ທີ່ແຂວງສະຫວັນນະເຂດ, ຈໍາປາສັກ ແລະ ອຸດົມໄຊ ແລະ ກອງປະຊຸມເຄືອຂ່າຍລະຫວ່າງແຮງງານເຄື່ອນຍ້າຍທີ່ກັບມາ ແລະ ຜູ້ມີແນວໂນ້ມວ່າຈະໄປເປັນແຮງງານເຄື່ອນຍ້າຍ ແລະ ຄອບຄົວເຂົາເຈົ້າ ທີ່ ນະຄອນຫຼວງວຽງຈັນ ມີຜູ້ເຂົ້າຮ່ວມ 439 ຄົນ; ຍິງ 267 ຄົນ; ໄດ້ລົງເຜີຍແຜ່ແຈ້ງການແນະນໍາການໂຄສະນາກ່ຽວການປັບປຸງຄ່າແຮງງານຂັ້ນຕໍ່າສຸດ ໃໝ່ສໍາລັບຜູ້ອອກແຮງງານ ຢູ່ ສປປ ລາວ ທີ່ລັດຖະບານປະກາດໃຊ້ ໂດຍອີງການກໍາມະບານລາວ (ລະບົບອອນລາຍ) ມີຜູ້ເຂົ້າຮ່ວມ 120 ຄົນ, ຍິງ 50 ຄົນ ທີ່ສູນກາງສະຫະພັນກໍາມະບານລາວ; ໄດ້ພິມແຜ່ນພັບການເຄື່ອນຍ້າຍແຮງງານທີ່ປອດໄພ ແລະ ຍຸຕິທໍາ ຈໍານວນ 200 ແຜ່ນ ແລະ ພິມເສື້ອຢືດຄໍາມົນ ຈໍານວນ 30 ຜືນ; ໄດ້ຮັບເບີສາຍດ່ວນ 1512 ຈໍານວນ 03 ຄັ້ງ;

1.2.11 **ກະຊວງປ້ອງກັນປະເທດ** ໄດ້ເອົາລາຍການປະຊາຮ່ວມໃຈຕ້ານໄພການຄ້າມະນຸດ ເພື່ອອອກທາງຄື້ນວິທະຍຸກະຈາຍສຽງ ກອງທັບປະຊາຊົນລາວ FM 99,7 MHz ວັນຈັນ ຫາ ວັນອາທິດ ເວລາ 20:00-2:30 ໂມງ (ພິເສດວັນເສົາ ຫາ ວັນອາທິດຈະອອກອາກາດ 02 ຄັ້ງ ຕອນເຊົ້າເວລາ 10:00-10:30 ໂມງ ແລະ ຕອນແລງເວລາ 21:30-22:00 ໂມງ) ຈັດລາຍການໄດ້ 471 ຄັ້ງ; ເປີດສະປອດໂຄສະນາຕ້ານການຄ້າມະນຸດ ຈໍານວນ 1,430 ຄັ້ງ ແລະ ເປີດເພງກ່ຽວກັບການຕ້ານການຄ້າມະນຸດ ຈໍານວນ 592 ຄັ້ງ; ອອກຂ່າວໄດ້ 338 ຂ່າວ (197 ຊົ່ວໂມງ); ໄດ້ຈັດກອງປະຊຸມສໍາມະນາສ້າງຄວາມເຂັ້ມແຂງວຽກງານຕ້ານການຄ້າມະນຸດ ໃຫ້ແກ່ນາຍ ແລະ ພົນທະຫານກອງທັບປະຊາຊົນລາວ ທີ່ກອງບັນຊາການທະຫານແຂວງຜົ້ງສາລີ ມີຜູ້ເຂົ້າຮ່ວມ 100 ຄົນ, ຍິງ 50 ຄົນ;

1.2.12 **ຄະນະກໍາມະການຕ້ານການຄ້າມະນຸດ ແຂວງ ແລະ ນະຄອນຫຼວງວຽງຈັນ ໄດ້ຈັດກິດຈະກໍາ ເພື່ອສະກັດກັ້ນ ແລະ ຕ້ານການຄ້າມະນຸດຄື:**

1.2.12.1 ໄດ້ຈັດພິທີລະນຶກເຖິງວັນສາກົນຕ້ານການຄ້າມະນຸດ ປະຈໍາປີ 2022 ມີຜູ້ເຂົ້າຮ່ວມ 1,009 ຄົນ, ຍິງ 339 ຄົນ;

1.2.12.2 ໄດ້ຈັດຝຶກອົບຮົມ ສ້າງຄວາມເຂັ້ມແຂງ ໃຫ້ແກ່ພະນັກງານພາກລັດ, ອາສາສະໝັກເພື່ອຊ່ວຍເພື່ອນ ແລະ ທັກສະການເປັນຄູຝຶກ ຢູ່ບັນດາຂະແໜງການຕ່າງໆຂອງແຂວງ ໄດ້ທັງໝົດ 40 ຄັ້ງ ມີຜູ້ເຂົ້າຮ່ວມທັງໝົດ 3,814 ຄົນ, ຍິງ 1,211 ຄົນ;

1.2.12.3 ໄດ້ລົງໂຄສະນາເຜີຍແຜ່ກົດໝາຍ ແລະ ບັນດານິຕິກໍາຕ່າງໆ ກ່ຽວກັບວຽກງານຕ້ານການຄ້າມະນຸດ ຢູ່ບັນດາເມືອງ, ບ້ານ, ໂຮງຮຽນມັດທະຍົມ, ມະຫາວິທະຍາໄລ, ຫົວໜ່ວຍແຮງງານ ໄດ້ທັງໝົດ 2,025 ຄັ້ງ ມີຜູ້ເຂົ້າຮ່ວມທັງໝົດ 258,313 ຄົນ, ຍິງ 118,181 ຄົນ;

1.2.12.4 ໄດ້ລົງໂຄສະນາຜ່ານໂທລະພາບ, ວິທະຍຸກະຈາຍສຽງ, ໂທລະໂຄ່ງແຂວງ ແລະ ບ້ານ ໄດ້ 2,516 ຄັ້ງ, ລົງໂຄສະນາປາກເປົ່າ 67 ຄັ້ງ ມີຜູ້ເຂົ້າຮ່ວມ 3,055 ຄົນ, ຍິງ 1,238 ຄົນ, ລົງຕິດປ້າຍໂຄສະນາຜົນຮ້າຍຂອງການຄ້າມະນຸດ ລຽບຕາມເສັ້ນທາງເທດສະບານແຂວງ ແລະ ໂຮງຮຽນລຽບຕາມຊາຍແດນ ໄດ້ 17 ຈຸດ, ໄດ້ອອກຂ່າວໂຄສນາການເຄື່ອນໄຫວວຽກງານຕ້ານການຄ້າມະນຸດໄດ້ 17 ຄັ້ງ, ສ້າງຄອບຄົວແບບຢ່າງໃນການປະຕິບັດກົດໝາຍໄດ້ 38,026 ຄອບຄົວ, ສ້າງບ້ານແບບຢ່າງໃນການປະຕິບັດກົດໝາຍໄດ້ 420 ບ້ານ, ໄດ້ແຈກຢາຍແຜ່ນພັບ 523 ແຜ່ນ, ໂປສະເຕີ້ 2215 ແຜ່ນ, ປຶ້ມປະມວນກົດໝາຍອາຍາທາງແພ່ງ, ກົດໝາຍອາຍາ 288 ຫົວ, ໄດ້ຈັດງານປະຖະກະຖາວັນສາກົນຍຸດຕິການໃຊ້ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກ ໄດ້ 02 ໂຮງຮຽນ ມີຜູ້ເຂົ້າຮ່ວມ 1,108 ຄົນ, ຍິງ 617 ຄົນ, ໄດ້ລົງເກັບກໍາສະຖິຕິແຮງງານລາວທີ່ກັບມາຈາກປະເທດໄທ ຜ່ານຂົວມິດຕະພາບ 02 ມີຈໍານວນ 3,194 ຄົນ, ຍິງ 1,576 ຄົນ, ໄດ້ຊຶບຊ້ອນເອົາວຽກງານຕ້ານການຄ້າມະນຸດ ເຂົ້າໃນການສິດສອນ ຈໍານວນ 08 ແຫ່ງ ແຕ່ຊັ້ນ ມໍ 04 ຫາ ມໍ 07;

**1.3. <u>ດ້ານວຽກງານການດໍາເນີນຄະດີ ແລະ ບັງຄັບໃຊ້ກົດໝາຍ</u>**

1.3.1 ບັນດາຂະແໜງການດຳເນີນຄະດີ ແລະ ບັງຄັບໃຊ້ກົດໝາຍຕາມຂະບວນການຍຸຕິທຳ ໄດ້ສຸມໃສ່ແກ້ໄຂບັນຫາການຄ້າມະນຸດທີ່ເກີດຂຶ້ນຢູ່ໃນປະເທດເຮົາຢ່າງເຂັ້ມງວດ ໂດຍສະເພາະແມ່ນເຂດເສດຖະກິດພິເສດສາມຫຼ່ຽມຄຳ, ເມືອງຕົ້ນເຜິ້ງແຂວງບໍ່ແກ້ວ. ໃນ 01 ປີຜ່ານມາ ໄດ້ດຳເນີນຄະດີຂໍ້ຫາຄ້າມະນຸດ ທັງໝົດ 39 ເລື່ອງ, ມີຜູ້ຖືກຫາ 98 ຄົນ, ຍິງ 71 ຄົນ, ຕ່າງປະເທດ 21 ຄົນ, ຍິງ 07 ຄົນ, ຜູ້ຖືກເຄາະ 107 ຄົນ, ຍິງ 82 ຄົນ, ອາຍຸຕໍ່າກວ່າ 18 ປີ 72 ຄົນ, ຍິງ 59 ຄົນ, ໃນນີ້ ເຂົ້າໃໝ່ 25 ເລື່ອງ, ຜູ້ຖືກຫາ 61 ຄົນ, ຍິງ 44 ຄົນ, ຕ່າງປະເທດ 14 ຄົນ, ຍິງ 05 ຄົນ, ຜູ້ຖືກເຄາະຮ້າຍ 55 ຄົນ, ຍິງ 41 ຄົນ, ດຳເນີນສຳເລັດ 29 ເລື່ອງ, ຜູ້ຖືກຫາ 86 ຄົນ, ຍິງ 62 ຄົນ, ຕ່າງປະເທດ 18 ຄົນ, ຍິງ 07 ຄົນ, ຜູ້ຖືກເຄາະຮ້າຍ 82 ຄົນ, ຍິງ 69 ຄົນ, ອາຍຸຕໍ່າກວ່າ 18 ປີ 61 ຄົນ, ຍິງ 49 ຄົນ, ໃນນີ້ : ໄດ້ຊຸດມ້ຽນ 01 ເລື່ອງ, ຜູ້ຖືກຫາ 27 ຄົນ, ຍິງ 18 ຄົນ, ໂຈະ 02 ເລື່ອງ, ຜູ້ຖືກຫາ 2 ຄົນ, ຍິງ 01 ຄົນ ແລະ ໄດ້ສົ່ງໄອຍະການ 26 ເລື່ອງ ຜູ້ຖືກຫາ 57 ຄົນ, ຍິງ 43 ຄົນ, ຕ່າງປະເທດ 13 ຄົນ, ຍິງ 05 ຄົນ, ຜູ້ຖືກເຄາະຮ້າຍ ມີ 76 ຄົນ, ຍິງ 63 ຄົນ, ອາຍຸຕໍ່າກວ່າ 18 ປີ 55 ຄົນ, ຍິງ 43 ຄົນ.

1.3.2 **ອົງການໄອຍະການປະຊາຊົນ** ໃນໄລຍະ 01 ປີ ໄດ້ມີຄະດີທັງໝົດ 31 ເລື່ອງ, ຜູ້ຖືກຫາ 70 ຄົນ, ຍິງ 52 ຄົນ, ຕ່າງປະເທດ 21 ຄົນ, ຍິງ 11 ຄົນ, ຜູ້ຖືກເຄາະຮ້າຍ ມີ 91 ຄົນ, ຍິງ 75 ຄົນ, ອາຍຸຕໍ່າກວ່າ 18 ປີ 68 ຄົນ, ຍິງ 53 ຄົນ, ໃນນີ້ ຄະດີເຂົ້າໃໝ່ 26 ເລື່ອງ, ຜູ້ຖືກຫາ 57 ຄົນ, ຍິງ 43 ຄົນ, ຕ່າງປະເທດ 13 ຄົນ, ຍິງ 05 ຄົນ, ຜູ້ຖືກເຄາະຮ້າຍ ມີ 76 ຄົນ, ຍິງ 63 ຄົນ, ອາຍຸຕໍ່າກວ່າ 18 ປີ 55 ຄົນ, ຍິງ 43 ຄົນ, ໄດ້ດຳເນີນສຳເລັດສົ່ງສັ່ງຟ້ອງຂຶ້ນສານ ຈຳນວນ 14 ເລື່ອງ, ຜູ້ຖືກຫາ 36 ຄົນ, ຍິງ 28 ຄົນ, ຜູ້ຖືກເຄາະຮ້າຍ 35 ຄົນ, ຍິງ 28 ຄົນ, ຕໍ່າກວ່າ 18 ປີ 34 ຄົນ, ຍິງ 26 ຄົນ. ໄດ້ສົ່ງຄືນໃຫ້ເຈົ້າໜ້າທີ່ 03 ເລື່ອງ, ພວມແຈ້ງຄຳສັ່ງຟ້ອງ 04 ເລື່ອງ, ກຳລັງຄົ້ນຄວ້າ 04 ເລື່ອງ, ໄດ້ປ່ຽນຂໍ້ຫາ 01 ເລື່ອງ. ນອກນັ້ນ ຍັງໄດ້ຈັດກອງປະຊຸມສ້າງຄວາມເຂັ້ມແຂງໃນການຕິດຕາມການດຳເນີນຄະດີຄ້າມະນຸດ ໃຫ້ແກ່ອົງການໄອຍະການປະຊາຊົນເຂດ, ແຂວງ ແລະ ອົງການໄອຍະການທະຫານແຂວງບໍລິຄຳໄຊ ເພື່ອຍົກລະດັບຄວາມຮູ້ຄວາມສາມາດທາງດ້ານວິຊາການໃນການດຳເນີນຄະດີຄ້າມະນຸດ ຈຳນວນ 04 ຄັ້ງ: ໃນວັນທີ 24-25 ມີນາ 2022 ຢູ່ທີ່ແຂວງບໍລິຄຳໄຊ, ວັນທີ 23-27 ພຶດສະພາ 2020 ທີ່ແຂວງບໍ່ແກ້ວ, ວັນທີ 09-13 ພຶດສະພາ 2022 ທີ່ຫຼວງນໍ້າທາ ແລະ ວັນທີ 25-29 ເມສາ 2022 ທີ່ອຸດົມໄຊ ມີຜູ້ເຂົ້າຮ່ວມ 176 ຄົນ, ຍິງ 37 ຄົນ;

1.3.3 **ສານປະຊາຊົນສູງສຸດ** ໄດ້ຈັດກອງປະຊຸມປຶກສາຫາລືກວດກາການກະກຽມປັບປຸງເນື້ອໃນປຶ້ມຄູ່ມືວຽກງານການດຳເນີນຄະດີຄ້າມະນຸດ ກັບບັນດາສະມາຊິກຜູ້ພິພາກສາ ຈຳນວນ 03 ຄັ້ງ: ວັນທີ 02-04 ມັງກອນ 2022 ແລະ ວັນທີ 17 ມັງກອນ 2022 ຢູ່ແຂວງວຽງຈັນ ແລະ ວັນທີ 17-30 ມີນາ 2022 ຢູ່ສະຖາບັນຝຶກອົບຮົມ ຂອງສານປະຊາຊົນສູງສຸດ ມີຜູ້ເຂົ້າຮ່ວມທັງໝົດ 49 ຄົນ, ຍິງ 10 ຄົນ;

### 1.4. <u>ດ້ານການປົກປ້ອງ ແລະ ຊ່ວຍເຫຼືອຜູ້ຖືກເຄາະຮ້າຍ</u>

1.4.1 **ສູນກາງສະຫະພັນແມ່ຍິງລາວ** ໄດ້ສະໜອງການຊ່ວຍເຫຼືອອັນຈຳເປັນ 05 ດ້ານ ແກ່ຜູ້ຖືກເຄາະຮ້າຍເຊັ່ນ: ສະຖານທີ່ພັກເຊົາທີ່ປອດໄພຊົ່ວຄາວ (ລວມມີອາຫານ, ເຄື່ອງນຸ່ງຫົ່ມ, ເຄື່ອງໃຊ້ສອຍອັນຈຳເປັນ, ການບຳບັດຟື້ນຟູທາງດ້ານແນວຄິດຈິດໃຈ), ການຊ່ວຍເຫຼືອດ້ານກົດໝາຍ, ດ້ານການແພດ, ການສຶກສາ ແລະ ຝຶກອົບຮົມວິຊາຊີບ, ການສົ່ງກັບຄືນສູ່ຄອບຄົວ ແລະ ສັງຄົມ, ນັບແຕ່ເດືອນ ມັງກອນ ຫາ ເດືອນ ທັນວາ 2022 ມີຜູ້ຖືກເຄາະຮ້າຍ ແລະ ກຸ່ມສ່ຽງຈາກການຄ້າມະນຸດ ທີ່ໄດ້ເຂົ້າມາບຳບັດຟື້ນຟູຢູ່ສູນໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ-ເດັກນ້ອຍ ຈຳນວນ 95 ຄົນ, ຍິງ 76 ຄົນ (ໃນນີ້ເປັນຜູ້ຖືກເຄາະຮ້າຍເປັນຄົນຫວຽດນາມ ຈຳນວນ 14 ຄົນ, ຍິງ 13 ຄົນ, ຊົນຊາດຈີນ 01 ຄົນ, ມາເລເຊຍ 02 ຄົນເປັນຍິງທັງໝົດ), ໄດ້ນຳສົ່ງຜູ້ຖືກເຄາະຮ້າຍກັບຄືນສູ່ຄອບຄົວ ແລະ ສັງຄົມ 73 ຄົນ, ຍິງ 63 ຄົນ (ໃນນີ້ຜູ້ຖືກເຄາະຮ້າຍທີ່

ເປັນຄົນສັນຊາດຫວຽດນາມ 14 ຄົນ, ຍິງ 13 ຄົນ, ຄົນຈີນ 01 ຄົນ, ມາເລເຊຍ 01 ຄົນ, ຍິງ 01 ຄົນ), ປັດຈຸບັນ ມີຜູ້ຖືກເຄາະຮ້າຍພັກເຊົາຢູ່ສູນ ຈຳນວນ 22 ຄົນ, ຍິງ 13 ຄົນ, ໃນນີ້ ເປັນຜູ້ຖືກເຄາະຮ້າຍຈາກການຄ້າມະນຸດຕ່າງປະເທດ 27 ຄົນ, ຈາກປະເທດໄທ ຈຳນວນ 25 ຄົນ, ຍິງ 16 ຄົນ, ອາຍຸຕໍ່າກວ່າ 18 ປີ 13 ຄົນ, ຍິງ 09 ຄົນ, ຈາກ ສປ ຈີນ 02 ຄົນ ເປັນຍິງທັງໝົດ ແລະ ເປັນຜູ້ຖືກເຄາະຮ້າຍພາຍໃນປະເທດ ຈຳນວນ 68 ຄົນ, ໄດ້ນຳພາຜູ້ຖືກເຄາະຮ້າຍໄປກວດສຸຂະພາບຢູ່ໂຮງໝໍ ຈຳນວນ 24 ຄັ້ງ, ມີຜູ້ຖືກເຄາະຮ້າຍ 74 ຄົນ, ຍິງ 59 ຄົນ, ໄດ້ເຮັດການປະຖົມພະຍາບານເບື້ອງຕົ້ນໃຫ້ແກ່ຜູ້ຖືກເຄາະຮ້າຍ ຈຳນວນ 394 ຄັ້ງ, ມີຜູ້ຖືກເຄາະຮ້າຍ ຈຳນວນ 84 ຄົນ, ຍິງ 72 ຄົນ, ໄດ້ຕິດຕາມຜູ້ຖືກເຄາະຮ້າຍທີ່ສົ່ງກັບຄືນສູ່ຄອບຄົວ ແລະ ສັງຄົມ ໄດ້ຈຳນວນ 53 ຄັ້ງ, ມີຜູ້ຖືກເຄາະຮ້າຍ 53 ຄົນ, ຍິງ 43 ຄົນ; ນອກນັ້ນຍັງເຮັດໜ້າທີ່ໃຫ້ຄຳປຶກສາທາງດ້ານກົດໝາຍ, ດ້ານຈິດໃຈ ແລະ ດ້ານສຸຂະພາບໂດຍບໍ່ເສຍຄ່າແກ່ແມ່ຍິງ-ເດັກນ້ອຍ ທີ່ມີບັນຫາ ແລະ ຜູ້ຖືກເຄາະຮ້າຍທີ່ພັກເຊົາຢູ່ສູນ. ຊຶ່ງການບໍລິການໃຫ້ຄຳປຶກສາແມ່ນມີ 02 ຮູບແບບຄື: ໃຫ້ຄຳປຶກສາຊຶ່ງໜ້າ (ຢູ່ສູນ) ແລະ ໃຫ້ຄຳປຶກສາທາງໂທລະສັບ (ສາຍດ່ວນ 1362). ນັບແຕ່ເດືອນ ມັງກອນ ຫາ ເດືອນ ທັນວາ 2022 ສາມາດບໍລິການໃຫ້ຄຳປຶກສາດ້ານກົດໝາຍແກ່ແມ່ຍິງ-ເດັກນ້ອຍ ສະເພາະບັນຫາການຄ້າມະນຸດ 42 ຄົນ (ໃໝ່ 15 ຄົນ), ຍິງ 33 ຄົນ ຈຳນວນ 35 ເລື່ອງ (ໃໝ່ 15 ເລື່ອງ), ລວມການບໍລິການໃຫ້ຄຳປຶກສາທັງໝົດ ຈຳນວນ 46 ຄັ້ງ (ຊຶ່ງໜ້າ 07 ຄັ້ງ, ໂທລະສັບ 05 ຄັ້ງ, ສາຍດ່ວນ 34 ຄັ້ງ); ໄດ້ຈັດກອງປະຊຸມປຶກສາຫາລືກ່ຽວກັບການກຽມຄວາມພ້ອມໃນການຮັບຜູ້ຖືກເຄາະຮ້າຍທີ່ຈະຖືກນຳສົ່ງກັບຄືນປະເທດ (ປະເທດໄທ) ຢ່າງເປັນທາງການ, ກອງປະຊຸມປຶກສາຫາລືກ່ຽວກັບການການມອບ-ຮັບເງິນຜູ້ຖືກເຄາະຮ້າຍ (ແບບລະບົບທາງໄກ) ແລະ ກອງປະຊຸມປຶກສາຫາລືແກ້ໄຂກໍລະນີຜູ້ຖືກເຄາະຮ້າຍຮ່ວມກັບຂະແໜງການຕ່າງໆທີ່ກ່ຽວຂ້ອງ ທີ່ນະຄອນຫຼວງວຽງຈັນ ມີຜູ້ເຂົ້າຮ່ວມ 51 ຄົນ, ຍິງ 34 ຄົນ, ຮ່ວມກັບກົມຕຳຫຼວດສະກັດກັ້ນ ແລະ ຕ້ານການຄ້າມະນຸດ ໄປຮັບຜູ້ຖືກເຄາະຮ້າຍທີ່ ທາງລັດຖະບານຣາຊະອານາຈັກໄທ ສົ່ງກັບຄືນປະເທດຢ່າງເປັນທາງການ ຈຳນວນ 03 ຄັ້ງ ທີ່ແຂວງໜອງຄາຍ (ປະເທດໄທ) ຈຳນວນ 24 ຄົນ, ຍິງ 14 ຄົນ, ອາຍຸຕ່ຳກວ່າ 18 ປີ 13 ຄົນ, ຍິງ 08 ຄົນ; ໄດ້ຈັດຝຶກອົບຮົມສ້າງຄວາມເຂັ້ມແຂງກ່ຽວກັບການນຳໃຊ້ກົດໝາຍ ວ່າດ້ວຍການຕ້ານການຄ້າມະນຸດ, ການກຳນົດຕົວ, ການປົກປ້ອງ, ຊ່ວຍເຫຼືອ ແລະ ສົ່ງຕໍ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໃຫ້ແຂວງເປົ້າໝາຍ ຈຳນວນ 12 ຊຸດຄື: ແຂວງຈຳປາສັກ, ແຂວງຫຼວງນ້ຳທາ, ແຂວງຫຼວງພະບາງ, ແຂວງຄຳມ່ວນ, ແຂວງ ສາລະວັນ, ສະຫວັນນະເຂດ ແລະ ໄຊສົມບູນ, ໄດ້ຈັດຝຶກອົບຮົມສ້າງຄວາມເຂັ້ມແຂງໃຫ້ພະນັກງານພາຍໃນສູນ 02 ຄັ້ງ ກ່ຽວກັບການການເປັນຄູຝຶກໃນວຽກງານການໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ-ເດັກນ້ອຍ ແລະ ຈັດຝຶກອົບຮົມທົດລອງການນຳໃຊ້ຄູ່ມືການບໍລິການໃຫ້ຄຳປຶກສາທາງໂທລະສັບສາຍດ່ວນ ແລະ ຈິດຕະສັງຄົມ ໃຫ້ແກ່ພະນັກງານສະຫະພັນແມ່ຍິງແຂວງ ຈຳນວນ 02 ຄັ້ງ: ທີ່ແຂວງບໍລິຄຳໄຊ ແລະ ແຂວງຄຳມ່ວນ ມີຜູ້ເຂົ້າຮ່ວມທັງໝົດ 685 ຄົນ, ຍິງ 487 ຄົນ; ໄດ້ຮ່ວມກັບເຈົ້າໜ້າທີ່ຕຳຫຼວດສະກັດກັ້ນ ແລະ ຕ້ານການຄ້າມະນຸດ ສຳພາດຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ແລະ ກຸ່ມສ່ຽງ ຈຳນວນ 34 ຄັ້ງ, ມີຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຈຳນວນ 34 ຄົນ, ອາຍຸຕໍ່າກວ່າ 18 ປີ 33 ຄົນ ເປັນຍິງທັງໝົດ, ພ້ອມທັງລົງລາຍເຊັນໃນຖານະເປັນປົກປ້ອງຜູ້ຖືກເຄາະຮ້າຍ. ປັດຈຸບັນກຳລັງດຳເນີນຢູ່ຂັ້ນເຈົ້າໜ້າທີ່ຕຳຫຼວດ, ໄດ້ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງເປັນຕົ້ນ ເຈົ້າໜ້າທີ່ຕຳຫຼວດ, ອົງການໄອຍະການປະຊາຊົນ, ສານປະຊາຊົນ ໃນການຕິດຕາມ, ຊຸກຍູ້ການດຳເນີນຄະດີຕໍ່ຜູ້ກະທຳຜິດສະຖານການຄ້າມະນຸດ ກໍ່ຄືການປົກປ້ອງຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ລວມຈຳນວນ 137 ຄັ້ງ; ໄດ້ຈັດພິທີມອບ-ຮັບເງິນຄ່າເສຍຫາຍທາງແພ່ງຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ລວມຈຳນວນ 254,375 ບາດ (ສອງແສນຫ້າສິບສີ່ພັນສາມຮ້ອຍເຈັດຫ້າບາດ) ຮ່ວມກັບກະຊວງການຕ່າງປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ ຊຶ່ງມີຜູ້ເຂົ້າຮ່ວມທັງໝົດ 09 ຄົນ, ຍິງ 05 ຄົນ ທີ່ນະຄອນຫຼວງວຽງຈັນ ແລະ ໄດ້ເຂົ້າຮ່ວມພິທີມອບ-ຮັບເງິນຊົດເຊີຍຄ່າແຮງງານທີ່ໄດ້ຮັບຈາກກະຊວງພັດທະນາສັງຄົມ ແລະ ຄວາມໝັ້ນຄົງຂອງມະນຸດແຫ່ງຣາຊະອານາຈັກໄທ ໃຫ້ແກ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຢູ່ສະຫະພັນແມ່ຍິງແຂວງຫຼວງພະບາງ, ແຂວງ ສາລະວັນ ແລະ ຈຳປາສັກ (ມີຜູ້ຖືກເຄາະຮ້າຍຈຳນວນ 06 ຄົນ);

1.4.2 **ຂະແໜງການຕ່າງປະເທດ** ໄດ້ປະສານສົມທົບກັບເຈົ້າໜ້າທີ່ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຊ່ວຍເຫຼືອທັງພົນລະເມືອງລາວ ແລະ ຊາວຕ່າງປະເທດທີ່ຕົກເປັນຜູ້ເຄາະຮ້າຍ ແລະ ກຸ່ມສ່ຽງຂອງຂະບວນການຄ້າມະນຸດ ລວມທັງໝົດ 48 ຄົນ ຄື: ໄດ້ຊ່ວຍເຫລືອແມ່ຍິງລາວ 01 ຄົນພ້ອມດ້ວຍລູກນ້ອຍອີກ 03 ຄົນ ທີ່ຖືກທຳຮ້າຍຮ່າງກາຍ ແລະ ຖືກຂົ່ມຂູ່ຈາກສາມີຄົນສັນຊາດມາເລເຊຍ ຢູ່ປະເທດມາເລເຊຍ ໃຫ້ກັບຄືນປະເທດຢ່າງປອດໄພ, ໄດ້ຊ່ວຍເຫລືອນຳສົ່ງພົນລະເມືອງລາວ ທີ່ຖືກເຄາະຮ້າຍຈາກການຄ້າມະນຸດ 02 ຄົນ ແລະ ເປັນຜູ້ຖືກເສຍຫາຍຈາກການໃຊ້ຄວາມຮຸນແຮງພາຍໃນຄອບຄົວ ຈຳນວນ 01 ຄົນ ຢູ່ປະເທດໄທ ໃຫ້ກັບຄືນປະເທດຢ່າງປອດໄພ, ໄດ້ນຳສົ່ງແມ່ຍິງລາວທີ່ຖືກຕົວະຍົວະໄປແຕ່ງດອງກັບຄົນຈີນ ແບບບໍ່ຖືກຕ້ອງຕາມກົດໝາຍ ແລະ ຈຳນວນໜຶ່ງ ແມ່ນຕົກໃນກຸ່ມສ່ຽງຈາກການຄ້າມະນຸດກັບຄືນປະເທດ ທັງໝົດ 28 ຄົນ, ໄດ້ນຳສົ່ງພົນລະເມືອງຊາວຫວຽດນາມ ທີ່ລັກລອບເຂົ້າ ສປປ ລາວ ແບບຜິດກົດໝາຍ ແລະ ຕົກເປັນຜູ້ເຄາະຮ້າຍຈາກການຄ້າມະນຸດ ຈຳນວນ 14 ຄົນກັບຄືນປະເທດ;

1.4.3 **ຂະແໜງການສາທາລະນະສຸກ** ສະໜອງຢາປິ່ນປົວປະຈຳປີ 2022 ຈຳນວນ 02 ຄັ້ງ: ໃຫ້ຄ້າຍຄຸມຂັງຢູ່ນາຂ່າ (ຈຳນວນເງິນ 3.748.000 ກີບ) ແລະ ໃຫ້ແກ່ຜູ້ຖືກເຄາະຮ້າຍ ແລະ ກຸ່ມສ່ຽງຈາກການຄ້າມະນຸດທີ່ເຂົ້າມາພັກເຊົາເພື່ອບຳບັດຟື້ນຟູຢູ່ສູນໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ-ເດັກນ້ອຍ (ເປັນຈຳນວນເງິນ 2.220.000 ກີບ) ແລະ ສຳເລັດການທົດແທນງົບປະມານທີ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດທີ່ເຂົ້າມາໃຊ້ບໍລິການຢູ່ໂຮງໝໍແມ່ ແລະ ເດັກເກີດໃໝ່, ໂຮງໝໍເດັກ, ໂຮງໝໍມະໂຫສົດ ແລະ ໂຮງໝໍ 05 ເມສາ ປະຈຳປີ 2022 (ເປັນຈຳນວນເງິນ 15.551.945 ກີບ), ແຕ່ລະໂຮງໝໍໄດ້ມີທີມງານຢູ່ທຸກໆໂຮງໝໍຂັ້ນສູນກາງຮອດຂັ້ນແຂວງເພື່ອບໍລິການຜູ້ຖືກເຄາະຮ້າຍ, ລວມທັງໃຫ້ຄຳປຶກສາແນະນຳດ້ານສຸຂະພາບຈິດ ແລະ ການບຳບັດຈິດ, ສຳລັບຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ກໍລະນີຜູ້ທຸກຍາກແມ່ນອີງໃສ່ນະໂຍບາຍຕາມລະບຽບກົດໝາຍວ່າດ້ວຍການປິ່ນປົວ, ກອງທຶນປະກັນສຸຂະພາບ ແລະ ກອງທຶນຊ່ວຍເຫຼືອຜູ້ທຸກຍາກ, ໃນນັ້ນ ໄດ້ບໍລິການກວດສຸຂະພາບໃຫ້ແກ່ຜູ້ຖືກຄວາມຮຸນແຮງທາງເພດ ຈຳນວນ 52 ຄົນ, ຍິງທັງໝົດ (ອາຍຸ 01 ປີ 07 ເດືອນ ຫາ 36 ປີ) ມີເດັກນ້ອຍເສຍຊີວິດ 01 ຄົນ ອາຍຸ 01 ປີ 07 ເດືອນ, ຜູ້ຖືກເຄາະຮ້າຍທີ່ຖືກຄວາມຮຸນແຮງຈາກການທຳຮ້າຍຮ່າງກາຍ, ຈິດໃຈ 07 ຄົນ, ຍິງ 06 ຄົນ (ອາຍຸ 06 ປີ ແລະ 19 ປີ) ໃນນີ້ ມີເດັກນ້ອຍຖືກປະຖິ້ມ 01 ຄົນ, ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດທີ່ສົ່ງມາກວດມີ 123 ຄົນ, ຍິງ 98 ຄົນ (ສະເລ່ຍອາຍຸ 03 ເດືອນ ຫາ 41 ປີ) ລວມຜູ້ຖືກເຄາະຮ້າຍທັງໝົດ 182 ຄົນ, ຍິງ 156 ຄົນ;

1.4.4 **ສູນກາງສະຫະພັນກຳມະບານລາວ** ໄດ້ຮັບຄຳຮ້ອງທຸກ, ໃຫ້ຄຳປຶກສາແກ່ຜູ້ປົກຄອງຂອງຜູ້ອອກແຮງງານທີ່ໄປອອກແຮງງານ ແລະ ບໍ່ໄດ້ຮັບຄວາມເປັນທຳທີ່ແຂວງ ບໍ່ແກ້ວ ເມືອງຕົ້ນເຜິ້ງ (ເຂດເສດຖະກິດສາມຫຼ່ຽມຄຳ) ຈຳນວນ 05 ຄົນ ແລະ ໄດ້ປະສານກັບພາກສ່ວນທີ່ກ່ຽວຂ້ອງເພື່ອໃຫ້ການຊ່ວຍເຫຼືອ (ຍັງຢູ່ຂັ້ນຕອນການປະສານງານເພື່ອຊ່ວຍເຫຼືອ); ໄດ້ຮັບຄຳຮ້ອງນຳສົ່ງເອກະສານກ່ຽວກັບຂໍ້ຂັດແຍ່ງທາງດ້ານແຮງງານຂອງກຳມະກອນຈາກສະຫະພັນກຳມະບານແຂວງຜົ້ງສາລີ 01 ສະບັບ ກ່ຽວກັບການຈ່າຍຄ່າແຮງງານຂອງກຳມະກອນ ກັບ ຜູ້ຮັບເໝົາກໍ່ສ້າງເສັ້ນທາງເທດສະບານໃໝ່ ເມືອງບຸນເໜືອ (ມີກຳມະກອນທັງໝົດ 75 ຄົນ, ຍິງ 03 ຄົນ), ຕ້ອງການເງິນຄ່າແຮງງານ ຈຳນວນ 146,708,000 ກີບ ຜູ້ຮັບເໝົາແມ່ນຄົນຫວຽດນາມ, ພະແນກປົກປ້ອງແຮງງານໄດ້ປະສານໄປຫາ ບໍລິສັດ ສຸພາພອນ ກ່ຽວກັບການຈ່າຍເງິນໃຫ້ຜູ້ຮັບເໝົາ ເຫັນວ່າປະຈຸບັນບໍລິສັດດັ່ງກ່າວຍັງບໍ່ທັນໄດ້ຈ່າຍເງິນຈຳນວນນີ້ໃຫ້ກັບຜູ້ຮັບເໝົາ; ໄດ້ຮັບຄຳຮ້ອງຂໍຄວາມເປັນທຳ ຈາກ ນ. ເອສມີ ລໍຊິນອິ ສັນຊາດມາເລເຊຍ ອາດີດຫົວໜ້າການເງິນ (CFO) ຂອງທະນາຄານມາລູຮານ ທີ່ມີສຳນັກງານຢູ່ນະຄອນຫຼວງວຽງຈັນ ກ່ຽວກັບການບໍ່ປະຕິບັດຕາມສັນຍາທີ່ສັນຍາກັນໄວ້; ໄດ້ຕິດຕາມຜົນຂອງການຈັດຕັ້ງປະຕິບັດຄຳພິພາກສາຄະດີແຮງງານ ກ່ຽວກັບການຈ່າຍເງິນຊົດເຊີຍໃຫ້ຜູ້ອອກແຮງງານຢູ່ບໍລິສັດລາວຢູນິເອີດ 02 ຊຶ່ງປະຈຸບັນທາງຈຳເລີຍໄດ້ຈ່າຍເງິນໃຫ້ກຳມະກອນແລ້ວຈຳນວນໜຶ່ງ ສ່ວນທີ່ຍັງເຫຼືອແມ່ນຈະຈ່າຍຕື່ມຕາມການຕົກລົງກັນ.

1.4.5 ຄະນະກຳມະການຕ້ານການຄ້າມະນຸດ ແຂວງ ແລະ ນະຄອນຫຼວງວຽງຈັນ ຍັງໄດ້ເຮັດວຽກງານປົກປ້ອງ ແລະ ຊ່ວຍເຫຼືອກຸ່ມສ່ຽງ ແລະ ຜູ້ຖືກເຄາະຮ້າຍຢູ່ໃນແຂວງຂອງຕົນ ເປັນຕົ້ນແມ່ນ: ສົ່ງໄປຝຶກອົບຮົມວິຊາ

ຊີບໄລຍະສັ້ນ 1.625 ຄົນ, ຍິງ 727 ຄົນ ສົ່ງໄປເຂົ້າໂຮງຮຽນສາມັນ 11 ຄົນ, ຈັດຫາວຽກເຮັດງານທໍາ ໃຫ້ແຮງງານລາວເຂົ້າເຮັດວຽກຢູ່ຫົວໜ່ວຍແຮງງານ ໄດ້ 513 ຄົນ, ຍິງ 331 ຄົນ. ສະເພາະຢູ່ນະຄອນຫຼວງ ໄດ້ 172 ຄົນ, ຍິງ 169 ຄົນ. ນອກນັ້ນ ຍັງໃຫ້ຄໍາປຶກສາກ່ຽວກັບກົດໝາຍແຮງງານ ຈໍານວນ 18 ຄັ້ງ, ໄດ້ ລົງກວດກາຫົວໜ່ວຍແຮງງານ 67 ຫົວໜ່ວຍ, ໄດ້ຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ແລະ ແຮງງານອອກຈາກເຂດ ພິເສດສາມຫຼ່ຽມຄໍາ ໄດ້ທັງໝົດ 797 ຄົນ, ຍິງ 330 ຄົນ, ໄດ້ຈັດກອງປະຊຸມສ້າງຄວາມເຂັ້ມແຂງໃຫ້ ສະຫະພັນແມ່ຍິງເມືອງ 07 ເມືອງ ເພື່ອປະເມີນຄວາມອາດສາມາດສໍາລັບໜ່ວຍງານໃຫ້ຄໍາປຶກສາ ແລະ ປົກ ປ້ອງແມ່ຍິງ-ເດັກນ້ອຍ ມີຜູ້ເຂົ້າຮ່ວມ 17 ຄົນ, ຍິງ 17 ຄົນ; ໄດ້ຈັດຝຶກອົບຮົມສ້າງຄວາມເຂັ້ມແຂງຄວາມ ສະເໝີພາບທາງດ້ານຍິງ-ຊາຍ ໃຫ້ຄະນະພັດທະນາບ້ານ, ຊາວໜຸ່ມເຍົາວະຊົນ ຢູ່ຕາມເມືອງ, ບ້ານ ແລະ ໂຮງຮຽນ ໄດ້ 10 ຄັ້ງ ມີຜູ້ເຂົ້າຮ່ວມ 736 ຄົນ, ຍິງ 434 ຄົນ;

## 1.5. <u>ດ້ານການພົວພັນຮ່ວມມືກັບຕ່າງປະເທດ</u>

### 1.5.1 ການຮ່ວມມືສອງຝ່າຍ ລະຫວ່າງ ສປປ ລາວ-ຣາຊະອານາຈັກໄທ

- **ຂະແໜງການປ້ອງກັນຄວາມສະຫງົບ** ໄດ້ເຂົ້າຮ່ວມກອງປະຊຸມທາງໄກກ່ຽວກັບການບໍລິຫານກໍລະນີຄຸ້ມ ຄອງ ແລະ ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ສອງຝ່າຍລາວ-ໄທ ຄັ້ງທີ 02 ມີຜູ້ເຂົ້າຮ່ວມ 57 ຄົນ, ຍິງ 32 ຄົນ ທີ່ໂຮງແຮມລາວພຣາຊາ; ໄດ້ເຂົ້າຮ່ວມຝຶກອົບຮົມວຽກງານຕ້ານການຄ້າມະນຸດ ໄລຍະ 01 ທີ່ຣາຊະອານາຈັກໄທ;
- **ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ** ໄດ້ສົ່ງໜັງສືແຈ້ງຕອບກະຊວງແຮງງານໄທ ກ່ຽວກັບ ການອະນຸຍາດໃຫ້ແຮງງານລາວທີ່ເຮັດວຽກຕາມລະບົບ MOU ຄົບ 04 ປີ ໃຫ້ສາມາດສືບຕໍ່ເຮັດວຽກໄປ ຕື່ມອີກ 02 ປີ ໂດຍບໍ່ຕ້ອງກັບຄືນປະເທດ ເພື່ອດໍາເນີນການຂໍອະນຸຍາດ ແຕ່ຕ້ອງໃຫ້ບັນດາວິສາຫະກິດ ບໍລິການຈັດຫາງານດໍາເນີນການ ໂດຍຜ່ານລະບົບອີເລັກໂທນິກ ແລະ ໄປສະນີ; ໄດ້ສົ່ງໜັງແຈ້ງກະຊວງ ແຮງງານໄທ ກ່ຽວກັບບັນຊີລາຍຊື່ບໍລິສັດຈັດຫາງານ ທີ່ໄດ້ຮັບອະນຸຍາດ ໃຫ້ດໍາເນີນທຸລະກິດຈັດຫາງານ ໄປຕ່າງປະເທດ; ໄດ້ເຂົ້າຮ່ວມ ກອງປະຊຸມວິຊາການແບບບໍ່ເປັນທາງການກ່ຽວກັບການແກ້ໄຂບັນຫາແຮງ ງານລາວທີ່ເຮັດວຽກແບບຜິດກົດໝາຍ ຢູ່ຣາຊະອານາຈັກໄທ; ໄດ້ສົ່ງແຈ້ງການເຖິງກົມການຈັດຫາງານ, ກະຊວງແຮງງານ ແຫ່ງຣາຊະອານາຈັກໄທ ເພື່ອໃຫ້ການຮ່ວມມື ກັບຄະນະຮັບຜິດຊອບແກ້ໄຂແຮງງານ ລາວທີ່ຈະໄປປະຈໍາຢູ່ສະຖານເອກອັກຄະລັດຖະທູດແຫ່ງ ສປປ ລາວ ປະຈໍາປະເທດໄທ ໃນເດືອນກັນຍາ 2022 ເຖິງ ເດືອນກຸມພາ 2023; ໄດ້ສົ່ງຄະນະຮັບຜິດຊອບໄປແກ້ໄຂບັນຫາແຮງງານລາວທີ່ເຮັດວຽກແບບ ຜິດກົດໝາຍ ຢູ່ປະເທດໄທ ໃຫ້ເປັນແຮງງານທີ່ຖືກຕ້ອງຕາມກົດໝາຍ ນັບແຕ່ວັນທີ 11 ກັນຍາ 2022 ຫາ 13 ກຸມພາ 2023;

### 1.5.2 ການຮ່ວມມືສອງຝ່າຍ ລະຫວ່າງ ສປປ ລາວ-ສ.ເກົາຫຼີ

- **ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ** ໄດ້ລົງນາມບົດບັນທຶກການຮ່ວມມືກັບອົງການປົກຄອງ ເມືອງ ຈໍານວນ 31 ເມືອງ ຂອງ ສ.ເກົາຫຼີ ກ່ຽວກັບການຈັດສົ່ງແຮງງານລາວໄປເຮັດວຽກ ຢູ່ ສ.ເກົາຫຼີ ຕາມລະດູການ ໄລຍະ 03-05 ເດືອນ;

### 1.5.3 ການຮ່ວມມືສອງຝ່າຍ ລະຫວ່າງ ສປປ ລາວ-ຍີ່ປຸ່ນ

- **ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ** ໄດ້ສໍາເລັດການລົງນາມບົດບັນທຶກຄວາມເຂົ້າໃຈ ການ ຮ່ວມມື (MOU) ວ່າດ້ວຍການຈ້າງແຮງງານລາວ ທີ່ມີສີມືໄປເຮັດວຽກຢູ່ປະເທດຍີ່ປຸ່ນ ລະຫວ່າງກະຊວງ ຮສສ ແຫ່ງ ສປປ ລາວ ແລະ ກະຊວງຍຸຕິທໍາ ຍີ່ປຸ່ນ ທີ່ໂຮງແຮມລາວພຣາຊາ ມີຜູ້ເຂົ້າຮ່ວມ 28 ຄົນ, ຍິງ 06 ຄົນ;

### 1.5.4 ການຮ່ວມມືຫຼາຍຝ່າຍ

**ກ. ການຮ່ວມມືໃນກອບອາຊຽນ**

- **ຂະແໜງການປ້ອງກັນຄວາມສະຫງົບ** ໄດ້ເຂົ້າຮ່ວມກອງປະຊຸມສຳມະນາທາງໄກກ່ຽວກັບການຂູດຮີດ ແລະ ສະແຫວງຫາຜົນປະໂຫຍດທາງເພດຈາກເດັກນ້ອຍ; ໄດ້ເຂົ້າຮ່ວມສຳມະນາທາງໄກໂຄງການກວດກາເປົ້າໝາຍການຄ້າມະນຸດ ແລະ ເຂົ້າ-ອອກເມືອງຜິດກົດໝາຍຂອງອົງການຕຳຫຼວດສາກົນມີຊື່ວ່າ "OPERATION STORM MAKERS" ໂຄງການດັ່ງກ່າວເປັນການປະສານງານລະຫວ່າງກົມຕຳຫຼວດສາກົນ, ກົມຕຳຫຼວດສະກັດກັ້ນ ແລະ ຕ້ານການຄ້າມະນຸດ ແລະ ກົມຕຳຫຼວດກວດຄົນເຂົ້າ-ອອກເມືອງ ເພື່ອກວດກາບຸກຄົນທີ່ພົວພັນກັບການຄ້າມະນຸດ ທີ່ເດີນທາງເຂົ້າມາ ສປປ ລາວ ແລະ ໄດ້ຈັດຕັ້ງປະຕິບັດ; ໄດ້ເຂົ້າຮ່ວມກອງປະຊຸມທາງໄກຂ້າມຂະແໜງການອາຊຽນເພື່ອເປັນເອກະພາບກັນກ່ຽວກັບບົດລາຍງານທົບທວນຄືນແຜນວຽກບໍໂຣ ວ່າດ້ວຍການຕ້ານການຄ້າມະນຸດ ໃນໄລຍະປີ 2017-2020 ແລະ ວາງທິດທາງແຜນການຕໍ່ໜ້າ ປະເທດຟີລິບປິນເປັນເຈົ້າພາບ; ໄດ້ເຂົ້າຮ່ວມກອງປະຊຸມທາງໄກເຈົ້າໜ້າທີ່ອາວຸໂສ ວ່າດ້ວຍການຕ້ານອາຊະຍາກຳຂ້າມຊາດ ຄັ້ງທີ 22 (22nd SOMTC);
- **ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ** ໄດ້ຈັດກອງປະຊຸມພາກພື້ນອາຊຽນ ກ່ຽວກັບການເພີ່ມທະວີການປະສານງານໃນການປົກປ້ອງ ແລະ ສືບສວນການຄ້າມະນຸດ ສຳລັບແຮງງານຖືກບັງຄັບ ທີ່ແຂວງຫຼວງພະບາງ ມີຜູ້ເຂົ້າຮ່ວມຈາກບັນດາປະເທດສະມາຊິກອາຊຽນ ແລະ ອົງການຈັດຕັ້ງສາກົນ ລວມທັງໝົດ 85 ຄົນ, ຍິງ 36 ຄົນ;

**ຂ. ການຮ່ວມມືສາກົນ**

- **ຂະແໜງປ້ອງກັນຄວາມສະຫງົບ** ໄດ້ເຂົ້າຮ່ວມກອງປະຊຸມຄະນະຊີ້ນຳພາກພື້ນ (COMMIT RTF) ແລະ ກອງປະຊຸມລັດຖະມົນຕີ ຂອງຂະບວນການຄອມມິດ ຄັ້ງທີ 05 (IMM) ຜ່ານລະບົບທາງໄກ ທີ່ໂຮງແຮມເມືອງແທງ ມີຜູ້ເຂົ້າຮ່ວມ 52 ຄົນ, ຍິງ 13 ຄົນ; ນັບແຕ່ເດືອນກັນຍາ ຫາ ເດືອນທັນວາ 2022 ໄດ້ເຂົ້າຊ່ວຍເຫຼືອ, ປົກປ້ອງແຮງງານລາວ ແລະ ຕ່າງປະເທດ ທີ່ເຂດເສດຖະກິດພິເສດ ໄດ້ທັງໝົດ 1.802 ຄົນ, ຍິງ 662 ຄົນ ໃນນີ້ແຮງງານລາວ 816 ຄົນ, ຍິງ 435 ຄົນ, ແຮງງານຕ່າງປະເທດ 986 ຄົນ, ຍິງ 227 ຄົນ, ສັນຊາດ ຈີນ 251 ຄົນ, ຍິງ 13 ຄົນ, ສັນຊາດ ຫວຽດນາມ 70 ຄົນ, ຍິງ 42 ຄົນ, ສັນຊາດ ປາກີສະຖານ 70 ຄົນ, ຍິງ 42 ຄົນ, ສັນຊາດ ເຄນຢາ 60 , ຍິງ 23 ຄົນ, ສັນຊາດ ມາເລເຊຍ 114 ຄົນ, ຍິງ 21 ຄົນ, ສັນຊາດ ລັດເຊຍ 10 ຄົນ, ຍິງ 07 ຄົນ, ສັນຊາດ ໄທ 182 ຄົນ, ຍິງ 66 ຄົນ, ສັນຊາດ ຟີລິປິນ 63 ຄົນ, ຍິງ 31 ຄົນ, ສັນຊາດ ອິນເດຍ 41 ຄົນ, ຍິງ 05 ຄົນ, ສັນຊາດ ອິນໂດເນເຊຍ 72 ຄົນ, ຍິງ 11 ຄົນ, ສັນຊາດ ກາຊັກສະຖານ 37 ຄົນ, ຍິງ 00 ຄົນ, ສັນຊາດ ເກົາຫຼີໃຕ້ 01 ຄົນ, ຍິງ 01 ຄົນ, ສັນຊາດ ອູການດາ 03 ຄົນ, ຍິງ 03 ຄົນ, ສັນຊາດ ສິງກະໂປ 01 ຄົນ, ຍິງ 01 ຄົນ, ສັນຊາດ ມຽນມາ 01 ຄົນ, ຍິງ 01 ຄົນ, ສັນຊາດ ກຳປູເຈຍ 01 ຄົນ, ຍິງ 01 ຄົນ, ສັນຊາດ ເອທິໂອເປຍ 03 ຄົນ, ຍິງ 00 ຄົນ, ສັນຊາດ ໄຕ້ຫວັນ 01 ຄົນ, ຍິງ 00 ຄົນ ແລະ ສັນຊາດ ເບລາຣູດ 01 ຄົນ, ຍິງ 01 ຄົນ;

**ຄ. ການຮ່ວມມືກັບອົງການຈັດຕັ້ງສາກົນ**

- **ຂະແໜງການປ້ອງກັນຄວາມສະຫງົບ** ຮ່ວມກັບອົງການວິນຣອກສາກົນ ຈັດກອງປະຊຸມພົບປະປຶກສາຫາລືກ່ຽວກັບການຈັດຕັ້ງປະຕິບັດແຜນກິດຈະກຳ ປະຈຳປີ 2022 ຂອງໂຄງການຫຼຸດຜ່ອນຄວາມສ່ຽງຈາກການຄ້າມະນຸດ ທີ່ກົມໃຫຍ່ຕຳຫຼວດ ແລະ ໄດ້ຈັດກອງປະຊຸມສົນທະນາແລກປ່ຽນລະຫວ່າງພາກລັດ ແລະ ອົງການຈັດຕັ້ງສາກົນ ກ່ຽວກັບວຽກງານຕ້ານການຄ້າມະນຸດ ແລະ ປຶກສາຫາລືກ່ຽວກັບການປະກອບສ່ວນສ້າງແຜນງານຕ້ານການຄ້າມະນຸດ ນະຄອນຫຼວງວຽງຈັນ ມີຜູ້ເຂົ້າຮ່ວມ 36 ຄົນ, ຍິງ 18 ຄົນ, ໄດ້ຈັດກອງປະຊຸມຝຶກອົບຮົມການສ້າງແຜນງານຂັ້ນແຂວງ ວ່າດ້ວຍການຕ້ານການຄ້າມະນຸດ ໃຫ້ຄະນະກຳມະການຕ້ານການຄ້າມະນຸດແຂວງ ແລະ ເມືອງເປົ້າໝາຍ ໄດ້ 03 ແຂວງ ນະຄອນຫຼວງວຽງຈັນ, ສາລະວັນ ແລະ ສະຫວັນນະເຂດ ມີຜູ້ເຂົ້າຮ່ວມ 232 ຄົນ, ຍິງ 80 ຄົນ; ຮ່ວມມືກັບແຜນງານອາຊຽນອົດສະຕາລີ (ASEAN-ACT) ຈັດກອງປະຊຸມສ້າງປຶ້ມຄູ່ມືຝຶກອົບຮົມຄູຝຶກວຽກງານສືບສວນ-ສອບສວນ ຄະດີຄ້າມະນຸດ ຈຳນວນ 04 ຄັ້ງ: ທີ່ແຂວງວຽງຈັນ, ໄດ້ຈັດກອງປະຊຸມສະຫຼຸບປະຈຳປີ ຂອງຄະນະກຳມະການຊີ້ນຳແຜນງານໂຄງການ ທີ່ໂຮງແຮມລາວເທວ ມີຜູ້ເຂົ້າຮ່ວມ 70 ຄົນ, ຍິງ 41 ຄົນ; ໄດ້ຈັດຝຶກອົບຮົມຄູຝຶກ

ວຽກງານສືບສວນ-ສອບສວນ 02 ຄັ້ງ: ໄດ້ 07 ແຂວງ ພາກໃຕ້ ທີ່ແຂວງສະຫວັນນະເຂດ ແລະ ໄດ້ 10 ແຂວງພາກເໜືອ ທີ່ ແຂວງຫຼວງພະບາງ ມີຜູ້ເຂົ້າຮ່ວມທັງໝົດ 80 ຄົນ, ຍິງ 15 ຄົນ, ເຂົ້າຮ່ວມການສຳມະນາທາງໄກກ່ຽວກັບ ການສົ່ງເສີມເຄືອຂ່າຍຕ້ານການຄ້າມະນຸດ; ເຂົ້າຮ່ວມກອງປະຊຸມທາງໄກປະກອບຄຳເຫັນໃສ່ຮ່າງແຜນຍຸດທະສາດການຮ່ວມມື ລະຫວ່າງ ລັດຖະບານລາວ ແລະ ອົງການສາກົນເພື່ອການເຄື່ອນຍ້າຍຖິ່ນຖານ (IOM) ສົກປີ 2022-2026; ໄດ້ສຳເລັດການລົງນາມບົດບັນທຶກຄວາມເຂົ້າໃຈການຮ່ວມມືລະຫວ່າງຫ້ອງການກອງເລຂາຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ ກັບ ອົງການສາກົນເພື່ອການເຄື່ອນຍ້າຍຖິ່ນຖານ (IOM) ເພື່ອຈັດຕັ້ງປະຕິບັດໂຄງການສ້າງຄວາມເຂັ້ມແຂງວຽກງານຕ້ານການຄ້າມະນຸດ ໃຫ້ຂັ້ນສູນກາງ ແລະ ທ້ອງຖິ່ນ ທີ່ນະຄອນຫຼວງວຽງຈັນ; ໄດ້ຈັດງານພິທີລະນຶກວັນສາກົນເພື່ອຕ້ານການຄ້າມະນຸດ ທີ່ນະຄອນຫຼວງວຽງຈັນ ມີຜູ້ເຂົ້າຮ່ວມ 200 ຄົນ, ຍິງ 60 ຄົນ; ໄດ້ຈັດພິມປຶ້ມແຜນງານແຫ່ງຊາດວ່າດ້ວຍການຕ້ານການຄ້າມະນຸດ ໄລຍະ 03 ປີ 2021-2025 ຈຳນວນ 2,000 ຫົວ; ໄດ້ເຂົ້າຮ່ວມການຝຶກອົບຮົມວຽກງານຕ້ານອາຊະຍາກຳທາງໄຊເບີ້ໃນຫົວຂໍ້: ການຄົ້ນຫາ, ການຍຶດ, ການເກັບກຳ ແລະ ຈັດສົ່ງຂໍ້ມູນຫຼັກຖານທາງດ້ານດີຈິຕອລ (Trainning on search, seizure, handing and transportation of Digital) ທີ່ໂຮງແຮມລາວພຣາຊາ ມີຜູ້ເຂົ້າຮ່ວມ 28 ຄົນ, ຍິງ 03 ຄົນ ຈັດໂດຍອົງການສະຫະປະຊາຊາດ ເພື່ອຕ້ານຢາເສບຕິດ ແລະ ອາຊະຍາກຳຂ້າມຊາດ ປະຈຳ ສປປ ລາວ (UNODC);

- **ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ** ຮ່ວມມືກັບອົງການເພື່ອນມິດສາກົນ (FI) ໃຫ້ການຊ່ວຍ ເຫຼືອເບິ່ງແຍງລ້ຽງດູແກ່ເດັກດ້ອຍໂອກາດທຸກຍາກ ທີ່ນອນໃນສູນເພື່ອນມິດ ຈຳນວນ 31 ຄົນ, ຍິງ 12 ຄົນ; ຮ່ວມມືກັບອົງການແສງສະຫວ່າງ ໃຫ້ການຊ່ວຍເຫຼືອກຸ່ມສ່ຽງຜູ້ດ້ອຍໂອກາດຢູ່ໃນສູນ ຈຳນວນ 157 ຄົນ ເປັນຍິງທັງໝົດ, ໃນນັ້ນຝຶກອົບຮົມວິຊາຊີບເສີມສວຍ 41 ຄົນ, ຕັດຫຍິບ 97 ຄົນ, ຕ່ຳຫູກ 01 ຄົນ, ສົ່ງ ເສີມເຂົ້າລະບົບສາມັນສຶກສາ 11 ຄົນ, ສົ່ງເສີມຮຽນມະຫາວິທະຍາໄລ 03 ຄົນ, ເຂົ້າສູນແລ້ວບໍ່ຮຽນ 04 ຄົນ, ຝຶກອົບຮົມວິຊາຊີບສ້ອມແປງລົດຈັກ ໃນຊຸມຊົນ 57 ຄົນ ຊາຍທັງໝົດ, ສົ່ງເສີມໃຫ້ເຂົ້າຮຽນວິທະຍາໄລຊຸມຊົນ 06 ຄົນ, ສົ່ງເສີມເຂົ້າຮຽນຕໍ່ລະບົບສາມັນສຶກສາໃນຊຸມຊົນ 39 ຄົນ, ປະກອບທຶນເຮັດທຸລະກິດຂະໜາດນ້ອຍຕັດຫຍິບ 28 ຄົນ, ເສີມສວຍ 12 ຄົນ, ສ້ອມແປງ 20 ຄົນ, ຊ່ວຍເຫຼືອມອບລົດຖີບໃຫ້ເດັກໄປໂຮງຮຽນ 07 ຄົນຊ່ວຍເຫຼືອຄອບຄົວ (ຄົນໃນຄອບຄົວເສຍຊີວິດ) 04 ຄົນ, ຊອກວຽກເຮັດງານທຳ 22 ຄົນ ແລະ ໃຫ້ການຊ່ວຍເຫຼືອນຳສົ່ງກັບຄືນສູ່ຄອບຄົວ 121 ຄົນ; ຮ່ວມມືກັບອົງການບ້ານຈຸດສຸມສາກົນ (VFI) ໄດ້ໃຫ້ການຊ່ວຍເຫຼືອສົ່ງກັບຜູ້ດ້ອຍໂອກາດ ແລະ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໄດ້ ທີ່ສຳເລັດການຝຶກອົບຮົມວິຊາຊີບ ຈຳນວນ 24 ຄົນ ເປັນຍິງທັງໝົດ ສົ່ງກັບຄືນສູ່ຄອບຄົວ ແລະ ສັງຄົມ (ນະຄອນຫຼວງວຽງຈັນ 01 ຄົນ, ໄຊຍະບູລີ 03 ຄົນ, ແຂວງວຽງຈັນ 09 ຄົນ ແລະ ຫຼວງພະບາງ 11 ຄົນ), ໃນນັ້ນສຳເລັດການຝຶກວິຊາຊີບຕັດຫຍິບ ຈຳນວນ 17 ຄົນ, ປຸງແຕ່ງອາຫານ ຈຳນວນ 02 ຄົນ ແລະ ເສີມສວຍ ຈຳນວນ 05 ຄົນ; ໃຫ້ການຊ່ວຍເຫຼືອສົ່ງກັບຜູ້ດ້ອຍໂອກາດ ແລະ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ທີ່ໄດ້ຮັບການສົ່ງເສີມຮຽນສາມັນຈາກໂຄງການຮ່ວມມື ລະຫວ່າງ ກະຊວງ ຮສສ ແລະ ອົງການບ້ານຈຸດສຸມສາກົນ ຈຳນວນ 01 ຄົນ (ຢູ່ແຂວງສະຫວັນນະເຂດ) ແລະ ນຳສົ່ງແມ່ຍິງທີ່ປິ່ນປົວສຸຂະພາບຈິດ ຈຳນວນ 01 ຄົນ (ຢູ່ແຂວງວຽງຈັນ), ປັດຈຸບັນເດັກ-ແມ່ຍິງ ຢູ່ສູນທັງໝົດ ຈຳນວນ 01 ຄົນ (ຮຽນສາມັນ ຢູ່ນະຄອນຫຼວງວຽງຈັນ); ໄດ້ຄົ້ນຄວ້າບົດບັນທຶກຄວາມເຂົ້າໃຈ ແລະ ສະເໜີຫາກະຊວງການຕ່າງປະເທດ ເພື່ອຂໍອະນຸມັດເຊັນບົດທຶກຄວາມເຂົ້າໃຈ ໂຄງການຊ່ວຍເຫຼືອເດັກ ແລະ ແມ່ຍິງດ້ອຍໂອກາດ ແຕ່ປີ 2022-2024 ລະຫວ່າງ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ອົງການບ້ານຈຸດສຸມສາກົນ; ໄດ້ຈັດກອງປະຊຸມປຶກສາຫາລື ກ່ຽວກັບ ການຮັບເອົາໂຄງການຊ່ວຍເຫຼືອເດັກ ແລະ ແມ່ຍິງດ້ອຍໂອກາດ ຢູ່ແຂວງຫຼວງພະບາງ ມີຜູ້ເຂົ້າຮ່ວມ 20 ຄົນ, ຍິງ 07 ຄົນ; ຮ່ວມມືກັບອົງການວິນຣອກສາກົນ (Winrock international) ໄດ້ຈັດຝຶກອົບຮົມການເຄື່ອນຍ້າຍແບບປອດໄພ, ສິດ ແລະ ຜົນປະໂຫຍດ

ຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃຫ້ແກ່ຄະນະກຳມະການປົກປ້ອງ ແລະ ຊ່ວຍເຫຼືອເດັກຂັ້ນເມືອງ ແລະ ຕາໜ່າງປົກປ້ອງເດັກຂັ້ນບ້ານ 07 ຄັ້ງ: ທີ່ແຂວງ ສາລະວັນ, ຈຳປາສັກ, ສະຫວັນນະເຂດ, ນະຄອນຫຼວງວຽງຈັນ ມີຜູ້ເຂົ້າຮ່ວມທັງໝົດ 452 ຄົນ, ຍິງ 145 ຄົນ; ໄດ້ຈັດກອງປະຊຸມນຳສະເໜີບົດລາຍງານການລົງເກັບກຳຂໍ້ມູນຜູ້ໃຫ້ການບໍລິການແກ່ກຸ່ມສ່ຽງ, ຜູ້ດ້ອຍໂອກາດ ແລະ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ, ຈັດກອງປະຊຸມປຶກສາຫາລື ຮ່າງບົດບັນທຶກຄວາມເຂົ້າໃຈຂອງໂຄງການຫຼຸດຜ່ອນຄວາມສ່ຽງຈາກການຄ້າມະນຸດ ແຕ່ປີ 2022-2024 ເພື່ອຄົ້ນຄວ້າສະເໜີລັດຖະບານຮັບຮອງ, ຈັດກອງປະຊຸມປຶກສາຫາລືຮ່າງບົດບັນທຶກຄວາມເຂົ້າໃຈຂອງໂຄງການຫຼຸດຜ່ອນຄວາມສ່ຽງຈາກການຄ້າມະນຸດ, ຈັດກອງປະຊຸມສະຫຼຸບຜົນການຈັດຕັ້ງປະຕິບັດຂອງໂຄງການຫຼຸດຜ່ອນຄວາມສ່ຽງຈາກການຄ້າມະນຸດ ມີຜູ້ເຂົ້າຮ່ວມທັງໝົດ 237 ຄົນ, ຍິງ 122 ຄົນ; ຮ່ວມມືກັບອົງການຈັດຕັ້ງສາກົນ ເພື່ອການເຄື່ອນຍ້າຍຖິ່ນຖານ (IOM) ໄດ້ມອບເຄື່ອງຊ່ວຍເຫຼືອໃຫ້ແກ່ສູນຈຳກັດບໍລິເວນ ທີ່ແຂວງ ຈຳປາສັກ ຈຳນວນ 5.316 ຊຸດ ພາຍໃຕ້ ໂຄງການປົກປ້ອງ ແລະ ບໍລິການຕັ້ງຖິ່ນຖານໃຫ້ແກ່ຜູ້ດ້ອຍໂອກາດ, ແຮງງານເຄື່ອນຍ້າຍ ແລະ ໄວໜຸ່ມ ຢູ່ແຂວງສະຫວັນນະເຂດ ແລະ ຈຳປາສັກ; ໄດ້ເຊັນ ລະຫວ່າງ ກະຊວງ ຮສສ ຕາງໜ້າໂດຍ ກົມສັງຄົມສົງເຄາະ ແລະ ອົງການຈັດຕັ້ງສາກົນເພື່ອການເຄື່ອນຍ້າຍຖິ່ນຖານ (IOM) ໃນການຈັດຕັ້ງປະຕິບັດໂຄງການເຄື່ອນຍ້າຍຖິ່ນຖານພາກພື້ນອາຊີ; ໄດ້ຈັດກອງປະຊຸມ ຄະນະກຳມະການຊີ້ນຳໂຄງການ ຮ່ວມມື 03 ຝ່າຍໃນອາຊຽນ (TRIANGLE in ASEAN) ທີ່ ໂຮງແຮມລາວພລາຊາ, ຈັດກອງປະຊຸມຊີ້ນຳໂຄງການ ແລະ ຄະນະປະສານງານໂຄງການ ການເຄື່ອນຍ້າຍແຮງງານແບບປອດໄພ ແລະ ເປັນທຳ, ຈັດກອງປະຊຸມປຶກສາຫາລືກ່ຽວກັບການຍຸດຕິຄວາມຮຸນແຮງ ແລະ ການລ່ວງລະເມີດທາງເພດຢູ່ສະຖານທີເຮັດວຽກ (C190) ພາຍໃຕ້ໂຄງການການເຄື່ອນຍ້າຍແຮງງານທີ່ປອດໄພ ແລະ ມີຄວາມຍຸຕິທຳ (Safe and Fair) ມີຜູ້ເຂົ້າຮ່ວມ 105 ຄົນ, ຍິງ 56 ຄົນ; ໄດ້ລົງຕິດຕາມສູນຂໍ້ມູນຂ່າວສານສຳລັບແຮງງານເຄື່ອນຍ້າຍ (MRC) ຢູ່ແຂວງ ໄຊຍະບູລີ, ຫຼວງພະບາງ ແລະ ຈຳປາສັກ; ໄດ້ຈັດຝຶກອົບຮົມການເຄື່ອນຍ້າຍແບບປອດໄພ, ສິດ ແລະ ຜົນປະໂຫຍດຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃຫ້ແກ່ຄະນະກຳມະການປົກປ້ອງ ແລະ ຊ່ວຍເຫຼືອເດັກຂັ້ນເມືອງ 04 ເມືອງ ແລະ ຂັ້ນບ້ານ ຈຳນວນ 40 ບ້ານ, ຈຳນວນ 03 ຄັ້ງ: ທີ່ແຂວງ ຫຼວງພະບາງ, ຜົ້ງສາລີ ແລະ ບໍ່ແກ້ວ ມີຜູ້ເຂົ້າຮ່ວມທັງໝົດ 256 ຄົນ, ຍິງ 69 ຄົນ; ຮ່ວມມືກັບມູນນິທິເອເຊຍ ໄດ້ສຳເລັດຈັດຝຶກອົບຮົມວຽກງານປ້ອງກັນ ແລະ ຊ່ວຍເຫຼືອກຸ່ມສ່ຽງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໃຫ້ແກ່ຄະນະກຳມະການປົກປ້ອງ ແລະ ຊ່ວຍເຫຼືອເດັກຂັ້ນເມືອງ ຈຳນວນ 09 ເມືອງ ແລະ ຄະນະຕາໜ່າງປົກປ້ອງເດັກຂັ້ນບ້ານ ຈຳນວນ 99 ບ້ານ ຈຳນວນ 04 ຄັ້ງ: ທີ່ແຂວງ ຫຼວງນ້ຳທາ, ຈຳປາສັກ, ສະຫວັນນະເຂດ ແລະ ນະຄອນຫຼວງວຽງຈັນ ມີຜູ້ເຂົ້າຮ່ວມ 589 ຄົນ, ຍິງ 264 ຄົນ; ໄດ້ຈັດຝຶກອົບຮົມການເຄື່ອນຍ້າຍແບບປອດໄພ, ສິດ ແລະ ຜົນປະໂຫຍດຂອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ໃຫ້ແກ່ຄະນະກຳມະການປົກປ້ອງ ແລະ ຊ່ວຍເຫຼືອເດັກຂັ້ນເມືອງ 02 ເມືອງ (ເມືອງ ອຸທຸມພອນ ແລະ ເມືອງ ຈຳພອນ) ແລະ ຂັ້ນບ້ານ ຈຳນວນ 20 ບ້ານ ທີ່ ແຂວງ ສະຫວັນນະເຂດ, ມີຜູ້ເຂົ້າຮ່ວມ 122 ຄົນ, ຍິງ 60 ຄົນ;

- **ສູນກາງສະຫະພັນແມ່ຍິງລາວ** ໄດ້ສຳເລັດການລົງນາມບົດບັນທຶກຄວາມເຂົ້າໃຈລະຫວ່າງສູນກາງສະຫະພັນແມ່ຍິງລາວ ແລະ ມູນນິທິເອເຊຍ ໃນໂຄງການສ້າງຄວາມເຂັ້ມແຂງແກ່ເຄືອຄ່າຍຕ້ານການຄ້າມະນຸດ ແລະ ການເຂົ້າເຖິງຂະບວນຍຸຕິທຳ ຕາມຂໍ້ຕົກລົງຂອງກະຊວງ ການຕ່າງປະເທດ ສະບັບເລກທີ 4476/ຕປທ.ຈສກ, ລົງວັນທີ 14 ທັນວາ 2021; ໄດ້ຈັດກອງປະຊຸມປຶກສາຫາລືຮ່ວມກັບພາກສ່ວນທີ່ກ່ຽວຂ້ອງພາກລັດ ແລະ ອົງການຈັດຕັ້ງສາກົນ ກ່ຽວກັບການຊ່ວຍເຫຼືອຜູ້ຖືກເຄາະຮ້າຍທີ່ສົ່ງກັບມາຢ່າງເປັນທາງການຈາກປະເທດໄທ ທີ່ສູນໃຫ້ຄຳປຶກສາ ແລະ ປົກປ້ອງແມ່ຍິງ-ເດັກນ້ອຍ ມີຜູ້ເຂົ້າຮ່ວມ 23 ຄົນ, ຍິງ 21 ຄົນ ແລະ ໄດ້ປະສານງານກອງເລຂາຄະນະກຳມະການຕ້ານການຄ້າມະນຸດ ແລະ ອົງການຈັດຕັ້ງສາກົນ ໃນການຈັດຕັ້ງປະຕິບັດກິດຈະກຳຕ່າງໆ ຈຳນວນ 642 ຄັ້ງ; ຮ່ວມມືກັບແຜນງານອາຊຽນ-ອົດສະຕາລີ ຈັດກອງປະຊຸມແລກປ່ຽນບົດຮຽນ, ປະສົບການໃນການສະໜັບສະໜູນ ແລະ ປົກປ້ອງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຈຳນວນ 02 ຄັ້ງ: ທີໂຮງແຮມເມືອງແທ້ງ ມີຜູ້ເຂົ້າຮ່ວມ 86 ຄົນ, ຍິງ 57 ຄົນ;

- **ຂະແໜງການ ການຕ່າງປະເທດ** ໄດ້ຈັດກອງປະຊຸມໜ່ວຍງານວິຊາການຕ້ານການຄ້າມະນຸດ ປະຈຳໄຕມາດ ຮ່ວມກັບບັນດາອົງການຈັດຕັ້ງສາກົນ 02 ຄັ້ງ: ທີ່ອົງການສະຫະປະຊາຊາດ ປະຈຳ ສປປ ລາວ ແລະ ໂຮງແຮມແລນມາກ ມີຜູ້ເຂົ້າຮ່ວມເຊິ່ງໜ້າ ແລະ ອອນລາຍທັງໝົດ 101 ຄົນ, ຍິງ 50 ຄົນ;

- **ຂະແໜງການຍຸຕິທຳ** ໄດ້ເປີດກອງປະຊຸມຮ່ວມກັບໂຄງການເບ່ບຊີໂດ ກ່ຽວກັບການຜະລິດສື່ໂຄສະນາກົດໝາຍ ທີ່ ກະຊວງ ຍຸຕິທຳ ມີຜູ້ເຂົ້າຮ່ວມ 15 ຍິງ 06 ຄົນ; ໄດ້ຈັດກອງປະຊຸມແລກປ່ຽນທາງດ້ານກົດໝາຍ ຮ່ວມກັບກະຊວງຍຸຕິທຳ ສສ ຫວຽດນາມ ທີ່ກະຊວງຍຸຕິທຳ ແລະ ຮ່ວມມືກັບໂຄການ ມູນິທິເອເຊຍ ລົງປະເມີນໂຄງການຊ່ວຍເຫຼືອທາງດ້ານກົດໝາຍ ທີ່ແຂວງອຸດົມໄຊ, ນະຄອນຫຼວງວຽງຈັນ, ສະຫັວນນະເຂດ ແລະ ສາລະວັນ;

- **ຂະແໜງການສຶກສາທິການ ແລະ ກິລາ** ໄດ້ຮັບການຊ່ວຍເຫຼືອຈາກອົງການວິນຣອກສາກົນ (Winrock international) ຈັດກອງປະຊຸມສ້າງຄວາມເຂັ້ມແຂງ ໃຫ້ແກ່ສະມາຊິກກອງເລຂາຄະນະກຳມະການຕ້ານການຄ້າມະນຸດ ຂັ້ນພະແນກສຶກສາທິການ ແລະ ກິລາແຂວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ ຈຳນວນ 03 ແຂວງ ທີ່ແຂວງຈຳປາສັກ, ສາລະວັນ ແລະ ສະຫວັນນະເຂດ ມີຜູ້ເຂົ້າຮ່ວມ 162 ຄົນ, ຍິງ 49 ຄົນ;

- **ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ** ໄດ້ຮັບການຊ່ວຍເຫຼືອຈາກກັບອົງການວິນຣອກສາກົນ (Winrock international) ຈັດຝຶກອົບຮົມ ວຽກງານສະກັດກັ້ນ ແລະ ຕ້ານການຄ້າມະນຸດ ໃຫ້ຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ຽວທ່ອງ ຈຳນວນ 02 ຄັ້ງ: ທີ່ນະຄອນຫຼວງວຽງຈັນ ແລະ ຈຳປາສັກ ມີຜູ້ເຂົ້າຮ່ວມ 100 ຄົນ, ຍິງ 31 ຄົນ; ຮ່ວມມືກັບມູນິທິເອເຊຍ ຈັດຝຶກອົບຮົມໃຫ້ນັກຂ່າວ-ນັກຂຽນບົດສື່ໂຄສະນາ, ບັນນາທິການໃຫ້ເຂົ້າໃຈກ່ຽວກັບວຽກງານຕ້ານການຄ້າມະນຸດ ທີ່ແຂວງວຽງຈັນ ມີຜູ້ເຂົ້າຮ່ວມ 40 ຄົນ, ຍິງ 22 ຄົນ;

- **ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ** ໄດ້ຮັບການຊ່ວຍເຫຼືອຈາກອົງການວິນຣອກສາກົນ (Winrock interna- tional) ໃນການເກັບກຳຂໍ້ມູນຂອງສູນຝຶກອົບຮົມວິຊາຊີບຢູ່ດອນບ໋ອດສໂກ້ ບ້ານດົງໝາກຄາຍ ເພື່ອໃຫ້ຊາວໜຸ່ມຜູ້ທີ່ຢູ່ໃນກຸ່ມສ່ຽງ ແລະ ຜູ້ທີ່ຖືກຕົກເປັນເຫຍື່ອຂອງການຄ້າມະນຸດ ເຂົ້າໄປຝຶກອົບຮົມວິຊາຊີບ;

- **ສູນກາງສະຫະພັນກຳມະບານລາວ** ຮ່ວມກັບອົງການແຮງງານສາກົນ (ILO) ໄດ້ຈັດຊຸດຝຶກອົບຮົມພັດທະນາສີມືແຮງງານ ສາຂາ ຊ່າງໄມ້-ເຟີນີເຈີ ໃຫ້ແກ່ຜູ້ອອກແຮງງານລາວທີ່ເຄື່ອນຍ້າຍມາແຕ່ຕ່າງປະເທດຊ່ວງການແຜ່ລະບາດ ຂອງພະຍາດ ໂຄວິດ-19 ທີ່ສະຖາບັນຝຶກອົບຮົມກະມະບານລາວໄດ້ທັງໝົດ 20 ຄົນ ແລະ ໄດ້ລົງໂຄສະນາເຜີຍແຜ່ກ່ຽວກັບການເຄື່ອນຍ້າຍແຮງງານທີ່ປອດໄພໃຫ້ແກ່ສະມາຊິກ ກຳມະບານ, ກຳມະກອນ, ຊາວຜູ້ອອກແຮງງານໃນລະບົບ ແລະ ນອກລະບົບ ຈຳນວນ 05 ຄັ້ງ: ໄດ້ 02 ແຂວງ: ແຂວງວຽງຈັນ, ໄຊຍະບູລີ ແລະ 01 ນະຄອນຫຼວງວຽງຈັນ, 06 ເມືອງ ແລະ ໂຮງງານ 04 ແຫ່ງ ມີຜູ້ເຂົ້າຮ່ວມທັງໝົດ 2,279 ຄົນ, ຍິງ 1,456 ຄົນ; ໄດ້ຮ່ວມມືກັບ ອົງການພິທັກສະຕິແຫ່ງປະເທດໄທ (AAT) ຈັດກອງປະຊຸມຮ່າງແຜນການຮ່ວມມືກ່ຽວກັບການໂຄສະນາວຽກງານສະກັດກັ້ນ ແລະ ຕ້ານການຄ້າມະນຸດ ໃຫ້ແກ່ຜູ້ອອກແຮງງານ ທີ່ສູນກາງສະຫະພັນກຳມະບານລາວ ມີຜູ້ເຂົ້າຮ່ວມ 29 ຄົນ, ຍິງ 13 ຄົນ; ໄດ້ຮ່ວມມືກັບອົງການອອກສະຟາມ (OXFAM) ຈັດກອງປະຊຸມ ກ່ຽວກັບການປົກປ້ອງແຮງງານນອກລະບົບ ທີ່ໂຮງແຮມລາວພຣາຊາ ມີຜູ້ເຂົ້າຮ່ວມ 55 ຄົນ, ຍິງ 29 ຄົນ ແລະ ໄດ້ລົງນາມບົດບັນທຶກຄວາມເຂົ້າໃຈ (MOU) ລະຫວ່າງ ສູນກາງສະຫະພັນກຳມະບານລາວ ກັບອົງການພິທັກສະຕິ (AAT) ກ່ຽວກັບວຽກງານສະກັດກັ້ນ ແລະ ຕ້ານການຄ້າມະນຸດ ທີ່ໂຮງແຮມຄຣາວພາຊາ ມີຜູ້ເຂົ້າຮ່ວມ 78 ຄົນ, ຍິງ 21 ຄົນ;

- **ອົງການໄອຍະການປະຊາຊົນສູງສຸດ** ໄດ້ຮັບການຊ່ວຍເຫຼືອຈາກແຜນງານອາຊຽນ-ອົດສະຕາລີ ຈັດກອງປະຊຸມສ້າງເອກະສານຝຶກອົບຮົມວຽກງານຕ້ານການຄ້າມະນຸດ ຂອງອົງການໄອຍະການປະຊາຊົນ ທີ່ແຂວງວຽງຈັນ ຜູ້ເຂົ້າຮ່ວມ 26 ຄົນ, ຍິງ 12 ຄົນ ແລະ ໄດ້ໃຫ້ສຳພາດກ່ຽວກັບວຽກງານຕ້ານການຄ້າມະນຸດກັບອົງການໄຈກາ (JICA) ປະຈຳ ສປປ ລາວ ທີ່ອົງການໄອຍະການປະຊາຊົນສູງສຸດ;
- **ຄະນະກຳມະການຕ້ານການຄ້າມະນຸດແຂວງ ແລະ ນະຄອນຫຼວງວຽງຈັນ** ໄດ້ຮັບການຊ່ວຍເຫຼືອຈາກອົງການຈັດຕັ້ງສາກົນເພື່ອການຍ້າຍຖິ່ນຖານ IOM ລົງໂຄສະນາໃຫ້ຄຳແນະນຳທີ່ໃຫ້ແກ່ຊາວໜຸ່ມເຍົາວະຊົນທີ່ເມືອງຈຳພອນ ແລະ ເມືອງໄຊພູທອງ ມີຜູ້ເຂົ້າຮ່ວມ 136 ຄົນ, ຍິງ 80 ຄົນ; ຮ່ວມມືກັບສູນແສງສະຫວ່າງ ເຜີຍແຜ່ບັນດາກົດໝາຍຕ້ານການຄ້າມະນຸດ ແລະ ກົດໝາຍ ວ່າດ້ວຍການຕ້ານການໃຊ້ຄວາມຮຸນແຮງ ແລະ ສິດທິເດັກ ໃຫ້ແກ່ເດັກ ແລະ ໄວໜຸ່ມຢູ່ໃນສູນແສງສະຫວ່າງ ໄດ້ 05 ຄັ້ງ ມີຜູ້ເຂົ້າຮ່ວມ 160 ຄົນ ເປັນຍິງທັງໝົດ; ໄດ້ຊ່ວຍເຫຼືອຜູ້ທີ່ດ້ອຍໂອກາດ ໃຫ້ໄດ້ຮັບການຟື້ນຟູທາງດ້ານແນວຄິດຈິດໃຈພ້ອມທັງສົ່ງເສີມວິຊາຊີບກ່ອນຈະກັບຄືນສູ່ສັງຄົມ ແລະ ຄອບຄົວ 23 ຄົນ ເປັນຍິງທັງໝົດ; ຮ່ວມມືກັບອົງການວິນລອກສາກົນ ຄັດເລືອກກຸ່ມເປົ້າໝາຍໄວໜຸ່ມວ່າງງານເພື່ອຊ່ວຍເຫຼືອໃຫ້ເຂົ້າຮຽນວິຊາຊີບ ແລະ ຊ່ວຍວຽກເຮັດງານທຳ ໃນ 03 ຕົວເມືອງ ມີທັງໝົດ 190 ຄົນ; ໄດ້ຮັບການຊ່ວຍເຫຼືອຈາກອົງການຈັດຕັ້ງສາກົນເພື່ອການເຄື່ອນຍ້າຍຖິ່ນຖານ ລົງໂຄສະນາເຜີຍແຜ່ຂໍ້ມູນ-ຂ່າວສານ ໃຫ້ຄຳແນະນຳກ່ຽວກັບແຮງງານເຄື່ອນຍ້າຍທີ່ປອດໄພ ສຳລັບແຮງງານລາວທີ່ຕ້ອງການໄປເຮັດວຽກຢູ່ຕ່າງປະເທດ ມີຜູ້ເຂົ້າຮ່ວມຮັບຟັງ 130 ຄົນ, ຍິງ 48 ຄົນ; ໄດ້ຮ່ວມມືກັບອົງການເພື່ອນມິດ ໃນການຊ່ວຍເຫຼືອເດັກຂ້າງຖະໜົນ ຝຶກອົບຮົມການປຸງແຕ່ງ ແລະ ບໍລິການອາຫານ ໃຫ້ໄວໜຸ່ມ ຈຳນວນ 12 ຄົນ, ຍິງ 01 ຄົນ, ໄດ້ຊ່ວຍເຫຼືອທີ່ພັກອາໄສ , ເຄື່ອງນຸ່ງຫົ່ມ, ເຄື່ອງນອນ ໃຫ້ໄວໜຸ່ມ ຈຳນວນ 12 ຄົນ, ຍິງ 09 ຄົນ, ນຳສົ່ງເຂົ້າເຮັດວຽກ 06 ຄົນ, ຍິງ 05 ຄົນ ແລະ ໄດ້ປະກອບອາຊີບດຳເນີນທຸລະກິດຂະໜາດນ້ອຍ 01 ຄົນ; ໄດ້ຮັບການຊ່ວຍເຫຼືອຈາກອົງການວິນລອກສາກົນ ລົງໂຄສະນາປຸກຈິດສຳນຶກໃຫ້ກຸ່ມສ່ຽງ ແລະ ຄັດເລືອກກຸ່ມເປົ້າໝາຍໃນ 04 ຕົວເມືອງຄື: ເມືອງສາລະວັນ, ເມືອງເລົ່າງາມ, ເມືອງວາປີ ແລະ ເມືອງຄົງເຊໂດນ ຈຳນວນ 04 ຄັ້ງ, ມີຜູ້ເຂົ້າຮ່ວມ 277 ຄົນ, ຍິງ 103 ຄົນ; ໄດ້ຮັບການຊ່ວຍເຫຼືອຈາກອົງການແຄ໋ນາໆຊາດປະຈຳແຂວງຫຼວງນ້ຳທາ ໄດ້ລົງພົບປະໂອລົມ, ຊຸກຍູ້ຕິດຕາມຊີວິດການເປັນຢູ່ ແລະ ມອບເຄື່ອງຊ່ວຍເຫຼືອໃຫ້ເດັກຜູ້ຖືກເຄາະຮ້າຍຈາກການໃຊ້ຄວາມຮຸນແຮງ ແລະ ເດັກພິການ 04 ບ້ານ, ທີ່ເມືອງລອງ, ແຂວງຫຼວງນ້ຳທາ ລວມມູນຄ່າ 13.567.000 ກີບ ມີຜູ້ເຂົ້າຮ່ວມທັງໝົດ 87 ຄົນ,ຍິງ 67 ຄົນ; ໄດ້ຮັບການຊ່ວຍເຫຼືອຈາກບ້ານຈຸດສຸມສາກົນ (VFI) ໄດ້ລົງມອບເຄື່ອງອຸປະໂພກ-ບໍລິໂພກ ແລະ ເຄື່ອງໃຊ້ປະຈຳວັນ ໃຫ້ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຈຳນວນ 02 ຄົນ ລວມມູນຄ່າ 1,944,000 ຄົນ;

**2. ສິ່ງທ້າທາຍ**

ຄຽງຄູ່ກັບດ້ານດີຜົນງານທີ່ກ່າວມານັ້ນ, ແຕ່ກໍ່ຍັງມີບາງຂໍ້ຄົງຄ້າງ ຈະຕ້ອງໄດ້ສືບຕໍ່ປັບປຸງແກ້ໄຂ ໃນຕໍ່ໜ້າດັ່ງນີ້:

2.1 ພວກກໍ່ອາຊະຍາກຳການຄ້າມະນຸດ ມີການເຄື່ອນໄຫວທີ່ເລິກແລບ, ມີລັກສະນະສັບສົນກວ່າເກົ່າ, ມີລັກສະນະຂ້າມຊາດ, ການນຳໃຊ້ເຄື່ອງມືສື່ສານຕິດຕໍ່ພົວພັນເຄື່ອນໄຫວໃນການກະທຳຜິດ ເຊິ່ງມີຄວາມຫຍຸ້ງຍາກໃນການຕິດຕາມ ຊອກຫາ ເປົ້າໝາຍຜູ້ກະທຳຜິດມາດຳເນີນຄະດີໄດ້ທັນເວລາ.

2.2 ສະພາບເສດຖະກິດຂອງໂລກ, ພາກພື້ນ ແລະ ພາຍໃນ ມີການເໜັງຕີງ, ອັດຕາເງິນຕ່າງປະເທດແຂ່ງຄ່າ, ເງິນກີບອ່ອນຕົວ, ຄ່າຄອງຊີບສູງ ແລະ ອື່ນໆ ເຊິ່ງເປັນຜົນກະທົບຕໍ່ການເຄື່ອນໄຫວເຮັດໜ້າທີ່ວຽກງານ ແລະ ດຳລົງຊີວິດຂອງປະຊາຊົນ ຫຼາຍສົມຄວນ.

2.3 ການໂຄສະນາ ປຸກຈິດສຳນຶກ ຍັງບໍ່ໄດ້ກວ້າງຂວາງເຂົ້າເຖິງກຸ່ມເປົ້າໝາຍເທົ່າທີ່ຄວນ ແລະ ການຄົ້ນຄວ້າສ້າງສື່ໂຄສະນາ ບໍ່ທັນມີຫຼາຍຮູບຫຼາຍສີ ແລະ ການໂຄສະນາ ບໍ່ທັນປົກກະຕິ-ຕໍ່ເນື່ອງ;

2.4 ລະດັບຄວາມຮູ້, ຄວາມເຂົ້າໃຈຂອງປະຊາຊົນຈຳນວນໜຶ່ງ ຕໍ່ກັບການໂຄສະນາຕົວະຍົວະຫຼອກລວງ, ຊັກຊວນຂອງພວກກຸ່ມຄ້າມະນຸດ ຍັງບໍ່ທັນດີ ຈຶ່ງເຮັດໃຫ້ຕົນເອງຕົກເປັນຜູ້ຖືກເຄາະຮ້າຍ, ກຸ່ມສ່ຽງ ຈາກການຄ້າມະນຸດ;

2.5 ການຮ່ວມມືສອງຝ່າຍ, ສາມຝ່າຍ ໃນການຈັດຕັ້ງປະຕິບັດຕາມແຜນການທີ່ສອງຝ່າຍໄດ້ຕົກລົງກັນ ຍັງບໍ່ທັນສາມາດຈັດຕັ້ງປະຕິບັດໄດ້ ຍ້ອນການແຜ່ລະບາດຂອງພະຍາດໂຄວິດ-19; ການຊ່ວຍເຫຼືອຫຼ້າຂອງອົງການຈັດຕັ້ງສາກົນຕ່າງໆ ສ່ວນຫຼາຍແມ່ນຊ່ວຍເຫຼືອດ້ານການຈັດກອງປະຊຸມ, ສໍາມະນາ, ຝຶກອົບຮົມສ້າງຄວາມເຂັ້ມແຂງດ້ານບຸກຂະລາກອນ, ແຕ່ການຊ່ວຍເຫຼືອດ້ານພື້ນຖານໂຄງລາງ, ວັດຖຸອຸປະກອນ, ພາຫະນະຮັບໃຊ້ວຽກງານຕ້ານການຄ້າມະນຸດ ແມ່ນມີໜ້ອຍ.

**3. ສາເຫດທີ່ພາໃຫ້ມີດ້ານດີ, ຂໍ້ຄົງຄ້າງ ແລະ ບາງບົດຮຽນທີ່ຖອດຖອນໄດ້.**

**3.1. ສາເຫດທີ່ພາໃຫ້ມີດ້ານດີ.**

3.1.1 ຍ້ອນລັດຖະບານ ເຫັນໄດ້ຄວາມສໍາຄັນ ແລະ ຄວາມຈໍາເປັນຕໍ່ວຽກງານຕ້ານການຄ້າມະນຸດ ຊຶ່ງໄດ້ກໍານົດແນວທາງ, ແຜນນະໂຍບາຍອັນຖືກຕ້ອງ, ມີແຜນງານແຫ່ງຊາດ, ມີກົດໝາຍ, ມີນິຕິກຳລຸ່ມກົດໝາຍ, ມີງົບປະມານ ຕອບສະໜອງໃຫ້ແກ່ວຽກງານດັ່ງກ່າວ ເປັນແຕ່ລະໄລຍະ;

3.1.2 ຍ້ອນຄວາມເອົາໃຈໃສ່ຊີ້ນໍາ-ນໍາພາຂອງປະທານ, ຮອງປະທານ, ຄະນະກໍາມະການຕ້ານການຄ້າມະນຸດລະດັບຊາດ ແລະ ທ້ອງຖິ່ນ ຕະຫຼອດຮອດສະມາຊິກກອງເລຂາ ໃນການຈັດຕັ້ງເຄື່ອນໄຫວເຮັດວຽກງານຕາມພາລະບົດບາດຢ່າງຕັ້ງໜ້າ ແລະ ມີໝາກຜົນຕົວຈິງ;

3.1.3 ຍ້ອນມີການຮ່ວມມື ແລະ ປະກອບສ່ວນຂອງປະຊາຊົນບັນດາເຜົ່າໃນສັງຄົມ ໃນການສະກັດກັ້ນ ແລະ ຕ້ານການຄ້າມະນຸດ;

3.1.4 ຍ້ອນມີການປະສານສົມທົບ ແລະ ຮ່ວມມື ເຊິ່ງກັນ ແລະ ກັນ ໃນການສະກັດກັ້ນ ແລະ ຕ້ານການຄ້າມະນຸດຢູ່ພາຍໃນ ແລະ ຕ່າງປະເທດ ຢ່າງຕໍ່ເນື່ອງ.

**3.2. ສາເຫດທີ່ພາໃຫ້ມີດ້ານຂໍ້ຄົງຄ້າງ.**

3.2.1 ຄວາມຮັບຮູ້ ຄວາມເຂົ້າໃຈຢ່າງກ້ວາງຂວາງ ແລະ ເລິກເຊິ່ງຕໍ່ພາລະບົດບາດ, ໜ້າທີ່, ຄວາມຮັບຜິດຊອບໃນສະກັດກັ້ນ ແລະ ຕ້ານການຄ້າມະນຸດ ຂອງພະນັກງານຈໍານວນໜຶ່ງ ຢູ່ໃນບາງຂະແໜງການນັບທັງຢູ່ສູນກາງ ແລະ ທ້ອງຖິ່ນ ຍັງຈໍາກັດ;

3.2.2 ຍ້ອນພວກກໍ່ອາຊະຍາກໍາຕ່າງໆ ນໍາໃຊ້ເທັກໂນໂລຊີຂໍ້ມູນຂ່າວສານໃນການໂຄສະນາຊວນເຊື່ອຜູ້ຖືກເຄາະຮ້າຍ, ຕິດຕໍ່ປະສານກັນໃນການກໍ່ກະທໍາຜິດ ເຊິ່ງມີຄວາມຫຍຸ້ງຍາກນໍາເອົາຕົວມານໍາເນີນຄະດີ, ຫົວໂປ້ໂຕການກະທໍາຜິດເປັນຄົນຕ່າງປະເທດຢູ່ຕ່າງປະເທດ ບັນຊາກຸ່ມແກ້ງເຄື່ອນໄຫວໃນລາວ, ສ່ວນຜູ້ຈັບມາດໍາເນີນຄະດີໄດ້ມີແຕ່ຜູ້ຍິງລາວ ຖືກຊື້ຈ້າງມາກະທໍາຜິດເທົ່ານັ້ນ.

3.2.3 ການໂຄສະນາຜົນຮ້າຍຂອງການຄ້າມະນຸດ ຍັງບໍ່ທັນເຖິງກຸ່ມເປົ້າໝາຍຢ່າງທົ່ວເຖິງ. ນອກຈາກນີ້, ລະບົບການຄຸ້ມຄອງແຮງງານລາວຢູ່ພາຍໃນ ແລະ ໄປອອກແຮງງານຢູ່ຕ່າງປະເທດ ແລະ ແຮງງານຕ່າງປະເທດມາອອກແຮງງານຢູ່ປະເທດເຮົາ ຍັງເຮັດບໍ່ທັນໄດ້ດີ, ບໍ່ທັນຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບເຮັດໃຫ້ຜູ້ອອກແຮງງານຈໍານວນໜຶ່ງຕົກເປັນຜູ້ຖືກເຄາະຮ້າຍ;

**III. ຕີລາຄາຜົນໄດ້ຮັບ ໃນ 01 ປີ ຜ່ານມາ.**

- ສັງລວມແລ້ວ, ຕະຫຼອດໄລຍະຂອງການຈັດຕັ້ງປະຕິບັດວຽກງານການສະກັດກັ້ນ ແລະ ຕ້ານການຄ້າມະນຸດໃນປີ 2022 ຜ່ານມາ, ເຖິງວ່າ ສປປລາວ ໄດ້ປະເຊີນໜ້າກັບຫຼາຍບັນຫາທ້າທາຍຫຼາຍຢ່າງກໍ່ຕາມ ເປັນຕົ້ນແມ່ນ: ການແຜ່ລະບາດຂອງພະຍາດໂຄວິດ 19, ບັນຫາໄພພິບັດທໍາມະຊາດ ກໍ່ເກີດຂຶ້ນຢ່າງຕໍ່ເນື່ອງລຽນຕິດ ແລະ ມີລັກສະນະຖີ່ຂຶ້ນ, ຊີວິດການເປັນຢູ່ຂອງປະຊາຊົນທີ່ຖືກກະທົບ ຢ່າງໜັກໜ່ວງພໍສົມຄວນ.
- ແຕ່ເຖິງຢ່າງໃດກໍ່ຕາມ ພາຍໃຕ້ການຊີ້ນໍາ-ນໍາພາຢ່າງໃກ້ຊິດຂອງລັດຖະບານ ແລະ ການເຄື່ອນໄຫວຢ່າງຕັ້ງໜ້າ ແລະ ມີຄວາມຮັບຜິດຊອບສູງຂອງຂະແໜງການທີ່ຮັບຜິດຊອບວຽກງານຕ້ານການຄ້າມະນຸດຂັ້ນສູນ

ກາງ ແລະ ທ້ອງຖິ່ນ ໂດຍໄດ້ຮັບການສະໜັບສະໜູນເປັນຢ່າງດີຂອງປະຊາຊົນ ແລະ ຄູ່ຮ່ວມພັດທະນາ ສາມາດຈັດຕັ້ງປະຕິບັດວຽກງານຕ້ານການຄ້າມະນຸດ ໄດ້ມີຜົນສຳເລັດເປັນຢ່າງດີ.

- ເຮັດໃຫ້ມີກົງຈັກການຈັດຕັ້ງ, ມີບຸກຄະລາກອນທີ່ແໜ້ນໜາ ແລະ ເປັນລະບົບ, ມີບັນດານິຕິກຳ, ຄູ່ມື, ສື່ ສິ່ງໂຄສະນາຕ່າງໆ ແລະ ອຸປະກອນຮັບໃຊ້ວຽກງານຕ້ານການຄ້າມະນຸດ, ເຮັດໃຫ້ບຸກຄະລາກອນຂອງ ບັນດາຂະແໜງການຕ່າງໆທາງພາກລັດ ແລະ ເອກະຊົນຕະຫຼອດເຖິງພໍ່ແມ່ປະຊາຊົນ ມີຄວາມຮັບຮູ້, ເຂົ້າໃຈຕໍ່ວຽກງານຕ້ານການຄ້າມະນຸດ ແລະ ມີສະຕິປ້ອງກັນຕົວເອງ ແລະ ປະກອບສ່ວນເຂົ້າໃນວຽກງານ ສະກັດກັ້ນ ແລະ ຕ້ານການຄ້າມະນຸດ ຢ່າງກວ້າງຂວາງພໍສົມຄວນ.
- ເຮັດໃຫ້ບັນຫາການຄ້າມະນຸດ ໄດ້ຮັບການສະກັດກັ້ນ ແລະ ແກ້ໄຂຢ່າງທັນການແຕ່ຫົວທີ, ສາມາດນຳເອົາ ຜູ້ກະທຳຜິດມາລົງໂທດຕາມລະບຽບກົດໝາຍ ໄດ້ຢ່າງເດັດຂາດ, ສາມາດກອບກູ້ ປົກປ້ອງ ແລະ ຊ່ວຍເຫຼືອ ຜູ້ຖືກເຄາະຮ້າຍທີ່ເປັນຄົນລາວ, ຕ່າງປະເທດໄດ້ຈຳນວນຫຼາຍ ເຊິ່ງສະແດງອອກດັ່ງຕົວເລກຜົນງານທີ່ໄດ້ ກຳນົດຂ້າງເທິງ.
- ເຮັດໃຫ້ ສປປລາວ ມີສະຖຽນລະພາບທາງດ້ານການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍ, ລະບົບການບໍລິຫານປົກຄອງ ໄດ້ກ້າວເຂົ້າສູ່ລະບຽບກົດໝາຍ ແລະ ມີຄວາມທັນ ສະໄໝຫຼາຍຂຶ້ນ, ສັງຄົມ ນັບມື້ນັບມີຄວາມເທົ່າທຽມ ແລະ ຍຸດຕິທຳເປັນກ້າວໆ.

**ຫົວໜ້າກອງເລຂາ**
**ຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ**

ກອງເລຂາ

ແກ່ນຈັນ ພົມມະຈັກ